ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 203 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 05.12.2016

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ທາງຫຼວງ (ສະບັບປັບປຸງ)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 (ສະບັບປັບປຸງ ປີ 2015);
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 021/ສພຊ, ລົງວັນທີ 08 ພະຈິກ 2016 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ທາງຫຼວງ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 045/ຄປຈ, ລົງວັນທີ 28 ພະຈິກ 2016.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍ ທາງຫຼວງ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ                                                                 ເລກທີ 021 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 08 / 11 / 16

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ທາງຫຼວງ (ສະບັບປັບປຸງ)

---

ອີງຕາມມາດຕາ 53 ຂໍ້ 1 ຂອງລັດຖະທຳມະນູນ (ສະບັບປັບປຸງ ປີ 2015) ແລະ ມາດຕາ 11 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ທາງຫຼວງ (ສະບັບປັບປຸງ) ໃນວາລະກອງປະຊຸມຕອນເຊົ້າ ຂອງວັນທີ 8 ພະຈິກ 2016.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍ ທາງຫຼວງ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 03 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 8 ພະຈິກ 2016

# ກົດໝາຍ

# ວ່າດ້ວຍທາງຫຼວງ (ສະບັບປັບປຸງ)

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການ, ຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານທາງຫຼວງ ເປັນຕົ້ນ ການວາງແຜນ, ສຳຫຼວດ, ອອກແບບ, ກໍ່ສ້າງ ແລະ ພັດທະນາ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີຄຸນນະພາບ, ປອດໄພ, ປະຢັດ, ໂປ່ງໃສ, ປົກປັກຮັກສາສິ່ງແວດລ້ອມ ແນໃສ່ຮັບປະກັນການຈະລາຈອນໃນທຸກລະດູການ ລະຫວ່າງສູນກາງ ທາແຂວງ, ນະຄອນຫຼວງ, ເຊື່ອມຕໍ່ຕົວເມືອງກັບຊົນນະບົດ, ເຂດຫ່າງໄກສອກຫຼີກໃຫ້ມີຄວາມສະດວກ, ສາມາດເຊື່ອມຈອດກັບພາກພື້ນ ແລະ ເຊື່ອມໂຍງກັບສາກົນ, ປະກອບສ່ວນເຂົ້າໃນການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 2 (ປັບປຸງ) ທາງຫຼວງ**

ທາງຫຼວງ ແມ່ນ ຂອບເຂດພື້ນທີ່ສາທາລະນະຊຶ່ງໄດ້ກໍ່ສ້າງຂຶ້ນ ເພື່ອຮັບໃຊ້ການສັນຈອນ ຈາກ ຈຸດໜຶ່ງ ຫາອີກຈຸດໜຶ່ງ.

**ມາດຕາ 3 (ໃໝ່) ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ທາງດ່ວນ** ໝາຍເຖິງ ທາງຫຼວງ ທີ່ເຊື່ອມຈອດລະຫວ່າງຈຸດໜຶ່ງ ຫາອີກຈຸດໜຶ່ງ ຊຶ່ງສາມາດແລ່ນດ້ວຍຄວາມໄວສູງຕະຫຼອດຊ່ວງທາງດັ່ງກ່າວ ໂດຍບໍ່ມີທາງຕັດ ຫຼື ທາງຄົບ;

2. **ຖະໜົນຫຼວງ** ໝາຍເຖິງ ເສັ້ນທາງສາຍເອກ ທີ່ຮັບເອົາກະແສການຈະລາຈອນທັງໝົດຂອງຕົວເມືອງ ລວມທັງກະແສການຈະລາຈອນເຂົ້າ-ອອກຕົວເມືອງ ຊຶ່ງແຜນຜັງຕົວເມືອງໄດ້ກໍານົດເປັນຖະໜົນສາຍເອກ;

3. **ຖະໜົນໃຫຍ່** ໝາຍເຖິງ ເສັ້ນທາງສາຍຫຼັກ ທີ່ຮັບເອົາກະແສການຈະລາຈອນຈາກເສັ້ນທາງສາຍເອກ ແລະ ເຂດຕ່າງໆຂອງຕົວເມືອງ ເຊັ່ນ ເຂດທີ່ຢູ່ອາໄສ, ເຂດການຄ້າໃຈກາງເມືອງ, ເຂດອຸດສາຫະກໍາ ແລະ ເຊື່ອມຈອດກັບຖະໜົນ ຊຶ່ງແຜນຜັງຕົວເມືອງໄດ້ກໍານົດເປັນຖະໜົນສາຍຫຼັກ;

4. **ຖະໜົນກາງ** ໝາຍເຖິງ ທາງສາຍແຈກ ທີ່ຮັບເອົາການກະຈາຍກະແສການຈະລາຈອນ ລະຫວ່າງທາງໃນຄຸ້ມຕ່າງໆຂອງຕົວເມືອງ ແລະ ທາງຢູ່ໃນເຂດ ຫຼື ສະຖານທີ່ຕ່າງໆ ຂອງຕົວເມືອງ, ເຊື່ອມຈອດກັບຖະໜົນໃຫຍ່ ແລະ ຖະໜົນນ້ອຍ ຊຶ່ງແຜນຜັງຕົວເມືອງໄດ້ກໍານົດເປັນຖະໜົນສາຍແຈກ;

5. **ຖະໜົນນ້ອຍ** ໝາຍເຖິງ ທາງໃນຄຸ້ມຕ່າງໆຂອງຕົວເມືອງ ທີ່ຮັບເອົາກະແສການຈະລາຈອນລະຫວ່າງຖະໜົນ ແລະ ຮ່ອມ ຊຶ່ງແຜນຜັງຕົວເມືອງໄດ້ກໍານົດເປັນຖະໜົນເຊື່ອມ;

6. **ຮ່ອມ** ໝາຍເຖິງ ທາງ ທີ່ຮັບເອົາກະແສການຈະລາຈອນເຂົ້າ-ອອກ ລະຫວ່າງຖະໜົນນ້ອຍ ແລະ ເຂດຊຸມຊົນ ຊຶ່ງແຜນຜັງຕົວເມືອງໄດ້ກໍານົດເປັນຮ່ອມ;

7. **ທາງສ່ວນຕົວ** ໝາຍເຖິງ ທາງ ທີ່ບຸກຄົນ ສ້າງຂຶ້ນ ເພື່ອຮັບໃຊ້ໃນເຂດພື້ນທີ່ຂອງຕົນ;

8. **ໂຄງການກໍ່ສ້າງ** ໝາຍເຖິງ ການກໍ່ສ້າງທາງຫຼວງປະເພດຕ່າງໆ ໂດຍມີ ຂອບເຂດ, ເປົ້າໝາຍ ແລະ ເງື່ອນໄຂສະເພາະ, ມີການກໍານົດຄວາມຮັບຜິດຊອບຂອງເຈົ້າຂອງໂຄງການ, ທີ່ປຶກສາ ແລະ ຜູ້ຮັບເໝົາ ພ້ອມທັງ ງົບປະມານ, ແຮງງານ, ພາຫະນະກົນຈັກ, ແຜນດໍາເນີນງານ, ເວລາເລີ່ມຕົ້ນ ແລະ ເວລາສິ້ນສຸດ;

9. **ໂຄງການບູລະນະຮັກສາທາງຫຼວງ** ໝາຍເຖິງ ການບູລະນະຮັກສາທາງຫຼວງປະເພດຕ່າງໆ ຕາມປົກກະຕິ ແລະ ຕາມການກໍານົດ ໂດຍມີ ຂອບເຂດ, ເປົ້າໝາຍ ແລະ ເງື່ອນໄຂສະເພາະ, ມີການກໍານົດຄວາມຮັບຜິດຊອບຂອງ ເຈົ້າຂອງໂຄງການ ແລະ ຜູ້ຮັບເໝົາ ພ້ອມທັງ ງົບປະມານ, ແຮງງານ, ພາຫະນະກົນຈັກ, ແຜນດໍາເນີນງານ, ເວລາເລີ່ມຕົ້ນ ແລະ ເວລາສິ້ນສຸດ;

10. **ໂຄງການສ້ອມແປງທາງຫຼວງ** ໝາຍເຖິງ ການປົວແປງທາງ ແລະ ສິ່ງປະກອບຕ່າງໆ ຂອງທາງຫຼວງປະເພດຕ່າງໆ ທີ່ເປ່ເພເສຍຫາຍ ໃຫ້ຢູ່ໃນສະພາບ ແລະ ມາດຕະຖານເດີມ ໂດຍມີ ຂອບເຂດ, ເປົ້າໝາຍ ແລະ ເງື່ອນໄຂສະເພາະ, ມີການກໍານົດຄວາມຮັບຜິດຊອບຂອງ ເຈົ້າຂອງໂຄງການ, ທີ່ປຶກສາ ແລະ ຜູ້ຮັບເໝົາ ພ້ອມທັງ ງົບປະມານ, ແຮງງານ, ພາຫະນະກົນຈັກ, ແຜນດໍາເນີນງານ, ເວລາເລີ່ມຕົ້ນ ແລະ ເວລາສິ້ນສຸດ;

11. **ໂຄງການກໍ່ສ້າງທາງຫຼວງທີ່ມີຄຸນນະພາບ** ໝາຍເຖິງ ໂຄງການກໍ່ສ້າງທາງຫຼວງ ທີ່ປະຕິບັດຖືກຕ້ອງຕາມກໍານົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກ ທີ່ໄດ້ກໍານົດໄວ້ໃນສັນຍາ ຫຼື ທີ່ໄດ້ຖືກຮັບຮອງໂດຍສະພາມາດຕະຖານແຫ່ງຊາດ;

12. **ໂຄງການກໍ່ສ້າງທາງຫຼວງທີ່ມີປະສິດທິຜົນ** ໝາຍເຖິງ ໂຄງການກໍ່ສ້າງທາງຫຼວງທີ່ປະຕິບັດສຳເລັດ ຕາມກຳນົດເວລາຢ່າງມີຄຸນນະພາບ ແລະ ຕາມງົບປະມານທີ່ໄດ້ອະນຸມັດ ພ້ອມທັງຕອບສະໜອງເປົ້າໝາຍຂອງການພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

13. **ໂຄງການກໍ່ສ້າງທາງຫຼວງທີ່ມີປະສິດທິພາບ** ໝາຍເຖິງ ໂຄງການກໍ່ສ້າງທາງຫຼວງ ທີ່ປະຕິບັດສຳເລັດ ໂດຍນຳໃຊ້ຊັບພະຍາກອນຢ່າງປະຢັດ, ສົມເຫດສົມຜົນ ແລະ ມີປະສິດທິຜົນ;

14. **ກິດຈະການກໍ່ສ້າງທາງຫຼວງ** ໝາຍເຖິງ ການກຳນົດໂຄງການລົງທຶນ, ການດຳເນີນການຈັດຕັ້ງປະຕິບັດວຽກງານກໍ່ສ້າງ ເຊັ່ນ ການສຶກສາຄວາມເປັນໄປໄດ້, ການສຳຫຼວດອອກແບບ, ການກໍ່ສ້າງ, ການສ້ອມແປງ, ການບູລະນະຮັກສາ, ການຂະຫຍາຍ, ການທັບມ້າງ, ການຄຸ້ມຄອງ, ການກວດກາ ແລະ ການຄວບຄຸມການກໍ່ສ້າງ;

15. **ການຟື້ນຟູ ຫຼື ປັບປຸງ ທາງເດີມ** ໝາຍເຖິງ ການສ້ອມແປງໂຄງສ້າງຊັ້ນໃດໜຶ່ງ, ປະກອບ ແລະ ຕິດຕັ້ງ ສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພ ຂອງທາງຫຼວງຊ່ວງໃດໜຶ່ງ;

16. **ການສ້ອມແປງສຸກເສີນ** ໝາຍເຖິງ ການສ້ອມແປງທາງຫຼວງ ທີ່ເປ່ເພກະທັນຫັນ ໃຫ້ສາມາດຮັບປະກັນການສັນຈອນໄດ້ທັນການ;

17. **ໂຄງສ້າງທາງ** ໝາຍເຖິງ ຊັ້ນທາງແຕ່ລະຊັ້ນ ເຊັ່ນ ຊັ້ນດິນທຳມະຊາດ, ຊັ້ນຍົກລະດັບ, ຊັ້ນຮອງພື້ນທາງ, ຊັ້ນພື້ນທາງ, ຊັ້ນໜ້າທາງ;

18. **ເຈົ້າຂອງໂຄງການ** ໝາຍເຖິງ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທີ່ໄດ້ຮັບງົບປະມານການລົງທຶນຂອງລັດ ຫຼື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດລົງທຶນ ໃນກິດຈະການກໍ່ສ້າງທາງຫຼວງ;

19. **ຄະນະຮັບຜິດຊອບໂຄງການ** ໝາຍເຖິງ ບຸກຄົນ ທີ່ໄດ້ຮັບການແຕ່ງຕັ້ງຈາກເຈົ້າຂອງໂຄງການເພື່ອຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ;

20. **ຜູ້ຮັບເໝົາ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ເຊັນສັນຍາກັບເຈົ້າຂອງໂຄງການ ເພື່ອດຳເນີນກິດຈະການກໍ່ສ້າງ, ບູລະນະຮັກສາ ຫຼື ສ້ອມແປງທາງຫຼວງ;

21. **ບໍລິສັດທີ່ປຶກສາ** ໝາຍເຖິງ ນິຕິບຸກຄົນ ທີ່ໄດ້ເຊັນສັນຍາກັບເຈົ້າຂອງໂຄງການ ເພື່ອໃຫ້ຄຳເຫັນ ຫຼື ຄຳແນະນຳທາງດ້ານເຕັກນິກວິຊາການ ລວມທັງດ້ານການບໍລິຫານໂຄງການ, ດຳເນີນການສຶກສາຄວາມເປັນໄປໄດ້, ການສຳຫຼວດ, ການອອກແບບ ຫຼື ການຄວບຄຸມການກໍ່ສ້າງ, ບູລະນະຮັກສາ ຫຼື ສ້ອມແປງ;

22. **ແບບເບື້ອງຕົ້ນ** ໝາຍເຖິງ ແຜ່ນແຕ້ມ ທີ່ໄດ້ຈາກການເກັບກຳຂໍ້ມູນ ທີ່ອະທິບາຍ ແລະ ສະແດງໃຫ້ເຫັນທິດທາງໃນການອອກແບບ ຊຶ່ງເປັນພື້ນຖານໃຫ້ແກ່ການກະກຽມການລົງທຶນທັງໝົດ ແລະ ການອອກແບບໃນຂັ້ນຕໍ່ໄປ;

23. **ແບບພື້ນຖານ** ໝາຍເຖິງ ແບບທີ່ປະກອບດ້ວຍແຜນຜັງທີ່ຕັ້ງຂອງໂຄງການ, ແຜນຜັງລວມທີ່ສະແດງໃຫ້ເຫັນລັກສະນະ ແລະ ລາຍລະອຽດຂອງໂຄງປະກອບ, ໂຄງສ້າງ, ສິ່ງປະກອບ ແລະ ລວງຍາວທັງໝົດຂອງທາງຫຼວງ;

24. **ແບບລະອຽດ** ໝາຍເຖິງ ແບບກໍ່ສ້າງຄົບຊຸດ ທີ່ປະກອບດ້ວຍ ແຜ່ນແຕ້ມເຕັກນິກ ແລະ ບັນດາຮູບຂະຫຍາຍ ໃນສ່ວນທີ່ຕ້ອງການຄວາມລະອຽດຊັດເຈນ ພ້ອມທັງແຜນຜັງການນຳໃຊ້ວັດສະດຸກໍ່ສ້າງ ແລະ ການຕິດຕັ້ງອຸປະກອນຕ່າງໆ;

25. **ການອອກແບບ ແລະ ກໍ່ສ້າງໄປພ້ອມກັນ** ໝາຍເຖິງ ຮູບການ ແລະ ວິທີການຈັດຕັ້ງປະຕິບັດໂຄງການ ທີ່ບໍລິສັດດຽວດຳເນີນການສຳຫຼວດ, ອອກແບບ ແລະ ກໍ່ສ້າງ;

26. **ກຳນົດໝາຍເຕັກນິກ** ໝາຍເຖິງ ຂໍ້ກຳນົດທາງດ້ານເຕັກນິກ ກ່ຽວກັບມາດຕະຖານຕໍ່າສຸດທີ່ຈຳເປັນສຳລັບການອອກແບບ, ການນຳໃຊ້ວັດສະດຸ, ຂັ້ນຕອນ ແລະ ວິທີການປະຕິບັດຂອງແຕ່ລະໜ້າວຽກເພື່ອໃຫ້ໄດ້ຜະລິດຕະພັນ ຫຼື ການບໍລິການ ຕາມມາດຕະຖານເຕັກນິກ ທີ່ກະຊວງໂຍທາທິການ ແລະ ຂົນສົ່ງວາງອອກ;

27. **ມາດຕະຖານເຕັກນິກ** ໝາຍເຖິງ ກຳນົດໝາຍທາງດ້ານເຕັກນິກ ຫຼື ວິສະວະກຳແບບດຽວກັນ ທີ່ສ້າງຂຶ້ນຢ່າງເປັນລະບົບໃນການກຳນົດ ຫຼັກເກນທາງດ້ານເຕັກນິກ, ວິທີການ, ຂະບວນການ ແລະ ການປະຕິບັດຕົວຈິງ;

28. **ແຜ່ນແຕ້ມເຕັກນິກ** ໝາຍເຖິງ ແຜນຜັງເຕັກນິກທີ່ປະກອບດ້ວຍແຜນຜັງທີ່ຕັ້ງ, ຮູບຕັດທາງຍາວ, ຮູບຕັດທາງຂວາງ, ຮູບຂະຫຍາຍຊິ້ນສ່ວນຂອງໂຄງສ້າງທາງ, ຂົວ, ລະບົບລະບາຍນໍ້າ ແລະ ສິ່ງປະກອບຕ່າງໆຂອງທາງ;

29. **ລາຄາຫົວໜ່ວຍ** ໝາຍເຖິງ ມູນຄ່າຕໍ່ໜ້າວຽກໃດໜຶ່ງ ຫຼື ກິດຈະການກໍ່ສ້າງໃດໜຶ່ງ ຊຶ່ງຄິດໄລ່ຕາມຫົວໜ່ວຍວັດແທກ ເປັນຕົ້ນ ຕາແມັດ, ແມັດກ້ອນ, ແມັດຍາວ, ກິໂລແມັດ ແລະ ຫົວໜ່ວຍວັດແທກອື່ນໆ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານທາງຫຼວງ**

ລັດຊຸກຍູ້ ແລະ ສົ່ງເສີມກິດຈະການທາງຫຼວງ ໃຫ້ດຳເນີນໄປຕາມກົດໝາຍ ແລະ ລະບຽບການ, ຖືກຕ້ອງຕາມ ກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກ ແລະ ລາຄາຫົວໜ່ວຍກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ, ຮັບປະກັນຄຸນນະພາບ, ປະສິດທິຜົນ, ການປະຢັດ, ຄວາມປອດໄພ, ຄວາມສວຍງາມ ແລະ ການປົກປັກຮັກສາສິ່ງແວດລ້ອມ ພ້ອມທັງສົ່ງເສີມການນຳໃຊ້ແຮງງານ ແລະ ວັດສະດຸກໍ່ສ້າງພາຍໃນ.

ລັດ ຊຸກຍູ້ ແລະ ສົ່ງເສີມ ການລົງທຶນຂອງພາກລັດ ແລະ ເອກະຊົນເຂົ້າໃນການພັດທະນາທາງຫຼວງ ໃຫ້ເຂົ້າເຖິງເຂດຊົນນະບົດ ແລະ ຫ່າງໄກສອກຫຼີກຢ່າງມີຈຸດສຸມ ໂດຍສະເພາະຮູບແບບການຮ່ວມມືລະຫວ່າງ ພາກລັດ ແລະ ເອກະຊົນ, ການສຳປະທານຂອງເອກະຊົນ ດ້ວຍນະໂຍບາຍທີ່ເໝາະສົມ.

ລັດສົ່ງເສີມທຸກພາກສ່ວນເສດຖະກິດ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນການສຶກສາຄວາມເປັນໄປໄດ້, ສຳຫຼວດ, ອອກແບບ, ກໍ່ສ້າງ, ບູລະນະຮັກສາ, ສ້ອມແປງ ແລະ ນຳໃຊ້ທາງຫຼວງ ດ້ວຍຮູບແບບການລົງທຶນຕ່າງໆ ຕາມກົດໝາຍ ແລະ ລະບຽບການ.

ລັດຊຸກຍູ້ ແລະ ສົ່ງເສີມ ໃຫ້ຜູ້ດຳເນີນທຸລະກິດ ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງທາງຫຼວງພາຍໃນປະເທດ ເຂົ້າເຖິງແຫຼ່ງທຶນ, ສ້າງຄວາມເຂັ້ມແຂງ, ພັດທະນາສີມືແຮງງານ ແລະ ສາມາດແຂ່ງຂັນກັບຕ່າງປະເທດ.

**ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານທາງຫຼວງ**

ການດຳເນີນວຽກງານທາງຫຼວງ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນຍຸດທະສາດພັດທະນາທາງຫຼວງ, ແຜນຜັງຕົວເມືອງ ແລະ ແຜນຍຸດທະສາດພັດທະນາຂອງຂະແໜງການອື່ນ;

2. ຖືກຕ້ອງຕາມແຜນຜັງໂຄງການ ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງທາງຫຼວງ, ກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກ ແລະ ລາຄາຫົວໜ່ວຍ ທີ່ໄດ້ຕົກລົງກັນ;

3. ມີຄຸນນະພາບ, ຄວາມປອດໄພ, ບໍ່ສົ່ງຜົນກະທົບທາງລົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ, ຕໍ່ພື້ນຖານໂຄງລ່າງທາງດ້ານເຕັກນິກ, ບູຮານສະຖານ, ທິວທັດທຳມະຊາດ ແລະ ສິ່ງແວດລ້ອມ;

4. ມີຄວາມເປີດເຜີຍ, ໂປ່ງໃສ, ຍືນຍົງ ແລະ ຜົນຕອບແທນສູງສຸດ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ສາມາດກວດສອບໄດ້;

5. ຮັບປະກັນການມີສ່ວນຮ່ວມຂອງອົງການປົກຄອງທ້ອງຖິ່ນ, ນັກວິຊາການທີ່ກ່ຽວຂ້ອງ ແລະ ປະຊາຊົນ.

**ມາດຕາ 6 (ປັບປຸງ) ພັນທະກ່ຽວກັບວຽກງານທາງຫຼວງ**

ພົນລະເມືອງລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ອາໄສຢູ່ ສປປ ລາວ ລ້ວນແຕ່ມີພັນທະເຄົາລົບ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການກ່ຽວກັບທາງຫຼວງ, ປະກອບສ່ວນເຂົ້າໃນການກໍ່ສ້າງ, ການບູລະນະຮັກສາ ແລະ ການສ້ອມແປງທາງຫຼວງ ລວມທັງກິດຈະການປ້ອງກັນຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍໃນການສັນຈອນ, ການຮັກສາຄວາມສະອາດ, ຄວາມສວຍງາມ ແລະ ປົກປັກຮັກສາສິ່ງແວດລ້ອມ.

**ມາດຕາ 7 (ໃໝ່) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດທີ່ພົວພັນ ແລະ ເຄື່ອນໄຫວກ່ຽວກັບວຽກງານທາງຫຼວງໃນຂອບເຂດທົ່ວປະເທດ.

ກົດໝາຍສະບັບນີ້ ບໍ່ນຳໃຊ້ສຳລັບທາງສ່ວນຕົວ ແລະ ກິດຈະການທາງລົດໄຟ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 8 (ໃໝ່) ການຮ່ວມມືສາກົນ**

ລັດ ເປີດກວ້າງ ແລະ ສົ່ງເສີມການພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານທາງຫຼວງ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດ, ເຕັກນິກ ແລະ ເຕັກໂນໂລຊີ, ການສ້າງ, ການບຳລຸງ, ການຍົກລະດັບດ້ານວິຊາການໃຫ້ແກ່ ພາກລັດ ແລະ ເອກະຊົນ, ການຮ່ວມມືດ້ານການລົງທຶນ ແລະ ປະຕິບັດຕາມສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ທາງຫຼວງ
## ໝວດທີ 1
## ປະເພດທາງຫຼວງ

**ມາດຕາ 9 (ປັບປຸງ) ປະເພດທາງຫຼວງ**

ທາງຫຼວງຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແບ່ງອອກເປັນ ຫົກ ປະເພດ ດັ່ງນີ້:

1. ທາງຫຼວງແຫ່ງຊາດ;
2. ທາງຫຼວງແຂວງ;
3. ທາງຫຼວງເມືອງ;
4. ທາງຕົວເມືອງ;
5. ທາງຊົນນະບົດ;
6. ທາງສະເພາະ.

**ມາດຕາ 10 (ປັບປຸງ) ທາງຫຼວງແຫ່ງຊາດ**

ທາງຫຼວງແຫ່ງຊາດ ແມ່ນ ທາງເຊື່ອມຈອດລະຫວ່າງນະຄອນຫຼວງ ໄປຫາເທດສະບານຂອງແຂວງ, ລະຫວ່າງແຂວງ ຫາແຂວງ, ທາງຍຸດທະສາດສາຍຫຼັກທີ່ຮັບໃຊ້ຜົນປະໂຫຍດລວມຂອງຊາດ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ຜົນປະໂຫຍດລະຫວ່າງຊາດ ທັງມີຄວາມສຳຄັນທາງດ້ານເສດຖະກິດ-ສັງຄົມ ແລະ ທາງເຊື່ອມຈອດກັບດ່ານສາກົນລະຫວ່າງປະເທດ.

ທາງຫຼວງແຫ່ງຊາດ ອາດຖືກກຳນົດເປັນທາງອະນຸພາກພື້ນ ຫຼື ພາກພື້ນ.

**ມາດຕາ 11 (ປັບປຸງ) ທາງຫຼວງແຂວງ**

ທາງຫຼວງແຂວງ ແມ່ນທາງເຊື່ອມຈອດຈາກເທດສະບານຂອງ ແຂວງ, ນະຄອນຫຼວງ ໄປຫາທາງຫຼວງແຫ່ງຊາດ, ຈາກເທດສະບານຂອງແຂວງໄປຫາ ເມືອງ, ເທດສະບານ, ນະຄອນ, ຈາກ

ເມືອງ ໄປຫາເມືອງຂອງແຂວງທີ່ຕິດຈອດກັນ, ຈາກເທດສະບານຂອງແຂວງ ໄປຫາເຂດພັດທະນາເສດຖະກິດ-ສັງຄົມທີ່ສຳຄັນ ເປັນຕົ້ນ ທ່າເຮືອ, ແຫຼ່ງທ່ອງທ່ຽວ, ສະຖານທີ່ປະຫວັດສາດ ແລະ ເຂດປ້ອງກັນຊາດ, ປ້ອງກັນຄວາມສະຫງົບຂອງແຂວງ, ນະຄອນຫຼວງ.

**ມາດຕາ 12 (ປັບປຸງ) ທາງຫຼວງເມືອງ**

ທາງຫຼວງເມືອງ ແມ່ນ ທາງເຊື່ອມຈອດຈາກ ເມືອງ, ເທດສະບານ, ນະຄອນ ໄປຫາບ້ານ, ຈາກບ້ານໄປຫາບ້ານຂອງເມືອງ, ເທດສະບານ, ນະຄອນທີ່ຕິດຈອດກັນ, ຈາກເມືອງ, ເທດສະບານ, ນະຄອນໄປຫາເຂດພັດທະນາເສດຖະກິດ-ສັງຄົມທີ່ສຳຄັນ ເປັນຕົ້ນ ທ່າເຮືອ, ແຫຼ່ງທ່ອງທ່ຽວ, ສະຖານທີ່ປະຫວັດສາດ ແລະ ເຂດປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ຂອງເມືອງ, ເທດສະບານ, ນະຄອນ.

**ມາດຕາ 13 (ປັບປຸງ) ທາງຕົວເມືອງ**

ທາງຕົວເມືອງ ແມ່ນທາງຢູ່ໃນເທດສະບານຂອງແຂວງ, ນະຄອນຫຼວງ, ເມືອງ, ນະຄອນ ຕາມທີ່ກຳນົດໄວ້ໃນແຜນຜັງຕົວເມືອງ.

ທາງຕົວເມືອງ ປະກອບດ້ວຍຖະໜົນ ຕົ້ນຕໍ ດັ່ງນີ້:

1. ຖະໜົນຫຼວງ;
2. ຖະໜົນໃຫຍ່;
3. ຖະໜົນກາງ;
4. ຖະໜົນນ້ອຍ;
5. ຮ່ອມ.

**ມາດຕາ 14 (ປັບປຸງ) ທາງຊົນນະບົດ**

ທາງຊົນນະບົດ ແມ່ນທາງຢູ່ເຂດນອກຕົວເມືອງ, ເທດສະບານ, ນະຄອນ ທີ່ມີປະລິມານການສັນຈອນຕ່ຳ ຊຶ່ງເປັນທາງເຊື່ອມຈອດລະຫວ່າງບ້ານ ຫາບ້ານ, ສະຖານທີ່ການຜະລິດ, ການບໍລິການ ແລະ ແຫຼ່ງຊັບພະຍາກອນທຳມະຊາດ.

**ມາດຕາ 15 (ປັບປຸງ) ທາງສະເພາະ**

ທາງສະເພາະ ແມ່ນທາງເຊື່ອມຈອດກັບເຂດສະເພາະ ເປັນຕົ້ນ ເຂດຜະລິດກະສິກຳ, ອຸດສາຫະກຳ, ປ່າສະຫງວນ, ທ່ອງທ່ຽວ, ເຂດຄົ້ນຄວ້າ ແລະ ບໍລິການຂອງຂະແໜງການ, ເຂດປ້ອງກັນຊາດ, ປ້ອງກັນຄວາມສະຫງົບ.

## ໝວດທີ 2
## ໂຄງປະກອບ, ສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພ ຂອງທາງຫຼວງ

**ມາດຕາ 16 (ປັບປຸງ) ໂຄງປະກອບຂອງທາງຫຼວງ**

ໂຄງປະກອບຂອງທາງຫຼວງ ປະກອບດ້ວຍ ໂຄງສ້າງຂອງທາງ, ບ່າທາງ, ທາງຄົນຍ່າງ, ທໍ່ລະບາຍນ້ຳ, ຮ່ອງລະບາຍນ້ຳ, ຕະລິ່ງທາງ, ຝາກັນດິນ, ກຳແພງຕ້ານເຈື່ອນ, ຂົວ, ອຸໂມງ, ທ່າຫຼຽບເຮືອບັກ, ເຮືອບັກ ແລະ ສະຖານທີ່ຈອດລົດ ທີ່ກ່ຽວພັນກັບທາງຫຼວງ.

**ມາດຕາ 17 (ປັບປຸງ) ສິ່ງປະກອບຂອງທາງຫຼວງ**

ສິ່ງປະກອບຂອງທາງຫຼວງ ແມ່ນ ວັດຖຸປະກອບທີ່ຕິດຕັ້ງໃສ່ທາງຫຼວງ ເພື່ອອຳນວຍຄວາມສະດວກ ແລະ ຮັບປະກັນຄວາມປອດໄພໃຫ້ແກ່ຜູ້ນຳໃຊ້ທາງຫຼວງ ຊຶ່ງຕົ້ນຕໍປະກອບດ້ວຍປ້າຍຈະລາຈອນ, ເຄື່ອງໝາຍຈະລາຈອນ, ໄຟສັນຍານຈະລາຈອນ, ລະບົບໄຟແສງສະຫວ່າງ ແລະ ບັນດາສິ່ງອຳນວຍຄວາມສະດວກ.

ສິ່ງປະກອບຂອງທາງຫຼວງ ຕ້ອງກຳນົດໃຫ້ເໝາະສົມ ຕາມແຕ່ລະປະເພດທາງຫຼວງ ເພື່ອຮັບປະກັນຄວາມສະດວກ, ຄວາມປອດໄພໃນການຈະລາຈອນ ແລະ ດຳເນີນການກວດສອບຄວາມປອດໄພຕາມມາດຕະຖານເຕັກນິກ ທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ/ຫຼື ສະພາມາດຕະຖານແຫ່ງຊາດ ກຳນົດ.

ສິ່ງປະກອບຂອງທາງຫຼວງ ຕ້ອງໄດ້ຂຶ້ນບັນຊີເປັນຊັບສິນຂອງລັດ ແລະ ມີການກວດກາ ເປັນປົກກະຕິ.

**ມາດຕາ 18 (ປັບປຸງ) ສິ່ງປ້ອງກັນຄວາມປອດໄພຂອງທາງຫຼວງ**

ສິ່ງປ້ອງກັນຄວາມປອດໄພຂອງທາງຫຼວງ ແມ່ນ ບັນດາກິດຈະການທີ່ສ້າງຂຶ້ນເພື່ອປ້ອງກັນໄພອັນຕະລາຍໃນການຈະລາຈອນ, ການເຊາະເຈື່ອນ, ມົນລະພິດຈາກຄ້ອນ, ສີ, ແສງ, ສຽງ ດ້ວຍການປູກຕົ້ນໄມ້, ສ້າງກຳແພງ ແລະ ສິ່ງປ້ອງກັນອື່ນໆ.

ສິ່ງປ້ອງກັນຄວາມປອດໄພຂອງທາງຫຼວງ ຕ້ອງສຶກສາຕາມສະພາບຂອງແຕ່ລະເສັ້ນທາງ ແລະ ຮັບປະກັນການນຳໃຊ້ໃຫ້ມີປະສິດທິຜົນ ແລະ ຍືນຍົງ.

## ໝວດທີ 3
## ຊື່ ແລະ ລະຫັດ ຂອງທາງຫຼວງ

**ມາດຕາ 19 (ໃໝ່) ຊື່ ຂອງທາງຫຼວງ**

ຊື່ຂອງທາງຫຼວງ ໃຫ້ຂຽນເປັນຕົວເລກ ແລະ ສາມາດເພີ່ມເຕີມດ້ວຍຕົວໜັງສື.

ສຳລັບທາງຫຼວງທີ່ມີຕອນທາງໃດໜຶ່ງ ເປັນທັງທາງຫຼວງແຫ່ງຊາດ ແລະ ທາງຕົວເມືອງນັ້ນ ໃຫ້ນຳໃຊ້ໄດ້ທັງສອງຊື່ ຄື ຊື່ຂອງທາງຫຼວງແຫ່ງຊາດ ແລະ ຊື່ຂອງທາງຕົວເມືອງ.

ສຳລັບຕອນທາງໃດໜຶ່ງຂອງທາງຫຼວງແຫ່ງຊາດ ທີ່ຖືກກຳນົດເປັນທາງອະນຸພາກພື້ນ, ພາກພື້ນນັ້ນ ໃຫ້ນຳໃຊ້ໄດ້ທັງສອງຊື່ ຄື ຊື່ຂອງທາງຫຼວງແຫ່ງຊາດ ແລະ ຊື່ຂອງທາງອະນຸພາກພື້ນ, ພາກພື້ນ.

ຊື່ຂອງທາງຕົວເມືອງ ໃຫ້ອົງການປົກຄອງທ້ອງຖິ່ນເປັນຜູ້ຄົ້ນຄວ້າ ໂດຍປະສານສົມທົບກັບຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ສະພາປະຊາຊົນຂັ້ນແຂວງ ແລ້ວນຳສະເໜີລັດຖະບານ ເພື່ອພິຈາລະນາອະນຸມັດ.

ຊື່ຂອງທາງຫຼວງແຫ່ງຊາດ ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄົ້ນຄວ້າແລ້ວນຳສະເໜີລັດຖະບານ ເພື່ອພິຈາລະນາອະນຸມັດ.

ສຳລັບຊື່ຂອງຂົວນັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 20 (ໃໝ່) ລະຫັດຂອງທາງຫຼວງ**

ລະຫັດຂອງທາງຫຼວງ ຖືກກຳນົດຕາມປະເພດທາງຫຼວງດ້ວຍຕົວອັກສອນ ແລະ ຕົວເລກ ດັ່ງນີ້:

1. ທາງຫຼວງແຫ່ງຊາດ ປະກອບດ້ວຍ ຕົວອັກສອນລາວ ທຊ ແລະ ຕົວອັກສອນສາກົນ NR ຫຼື AH ສຳລັບທາງຫຼວງແຫ່ງຊາດທີ່ຖືກກຳນົດເປັນທາງອະນຸພາກພື້ນ, ພາກພື້ນຕິດຕາມດ້ວຍຕົວເລກ ໜຶ່ງ ຫຼື ສອງ ຕົວ ຫຼື ອາດເພີ່ມລົງທ້າຍດ້ວຍຕົວອັກສອນ;
2. ທາງຫຼວງແຂວງ ປະກອບດ້ວຍຕົວອັກສອນລາວ ທຂ ແລະ ຕົວອັກສອນສາກົນ PR ຕິດຕາມດ້ວຍ ນ້ຳເບີທາງ ສີ່ ຕົວເລກ;
3. ທາງຫຼວງເມືອງ ປະກອບດ້ວຍຕົວອັກສອນລາວ ທມ ແລະ ຕົວອັກສອນສາກົນ DR ຕິດຕາມດ້ວຍ ນ້ຳເບີທາງ ສີ່ ຕົວເລກ;
4. ທາງຊົນນະບົດ ປະກອບດ້ວຍຕົວອັກສອນລາວ ທບ ແລະ ຕົວອັກສອນສາກົນ RR ຕິດຕາມດ້ວຍ ນ້ຳເບີທາງ ສີ່ ຕົວເລກ.

ສຳລັບທາງຕົວເມືອງ ແມ່ນ ບໍ່ມີລະຫັດ ແຕ່ໃຫ້ໃສ່ຊື່ຕາມບຸກຄົນທີ່ມີຊື່ສຽງ, ມີຄຸນງາມຄວາມດີຕໍ່ປະເທດຊາດ, ເຫດການ ຫຼື ຮ່ອງຮອຍ ທີ່ສຳຄັນ ທາງດ້ານປະຫວັດສາດ, ວັດທະນະທຳ, ສັງຄົມ, ສະຖານທີ່ ຫຼື ປະເພນີຂອງທ້ອງຖິ່ນ ໂດຍແມ່ນອົງການປົກຄອງແຂວງ, ນະຄອນຫຼວງ ເປັນຜູ້ຄົ້ນຄວ້າ ໂດຍປະສານສົມທົບກັບຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ສະພາປະຊາຊົນຂັ້ນແຂວງແລ້ວນຳສະເໜີລັດຖະບານພິຈາລະນາ.

# ໝວດທີ 4

## ຂອບເຂດຂອງທາງຫຼວງ

**ມາດຕາ 21 (ປັບປຸງ) ຂອບເຂດຂອງທາງຫຼວງ**

ຂອບເຂດຂອງທາງຫຼວງ ແມ່ນ ພື້ນທີ່ທັງໝົດຂອງທາງຫຼວງ ຢູ່ໜ້າດິນ, ເທິງໜ້າດິນ ແລະ ໃຕ້ດິນ ຊຶ່ງບໍ່ອະນຸຍາດໃຫ້ມີການກໍ່ສ້າງ ຫຼື ປຸກສ້າງກິດຈະການໃດໜຶ່ງ.

ໃນກໍລະນີທີ່ມີຄວາມຈຳເປັນກໍ່ສ້າງ ຫຼື ປຸກສ້າງກິດຈະການໃດໜຶ່ງໃນຂອບເຂດຂອງທາງຫຼວງ ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງວຽກງານທາງຫຼວງ ຕາມການແບ່ງຂັ້ນຄຸ້ມຄອງ ໂດຍມີການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 22 (ປັບປຸງ) ເຂດສະຫງວນຢູ່ໜ້າດິນຂອງທາງຫຼວງ**

ເຂດສະຫງວນຢູ່ໜ້າດິນ ຂອງທາງຫຼວງແຕ່ລະປະເພດ ມີ ລວງກວ້າງ ດັ່ງນີ້:

1. ທາງຫຼວງແຫ່ງຊາດ ມີລວງກວ້າງ ເບື້ອງລະ ຊາວຫ້າ ແມັດ ນັບແຕ່ໃຈກາງທາງອອກໄປ;
2. ທາງຫຼວງແຂວງ ມີລວງກວ້າງ ເບື້ອງລະ ສິບຫ້າ ແມັດ ນັບແຕ່ໃຈກາງທາງອອກໄປ;
3. ທາງຫຼວງເມືອງ ມີລວງກວ້າງ ເບື້ອງລະ ສິບ ແມັດ ນັບແຕ່ໃຈກາງທາງອອກໄປ;
4. ທາງຊົນນະບົດ ມີລວງກວ້າງ ເບື້ອງລະ ຫ້າ ແມັດ ນັບແຕ່ໃຈກາງທາງອອກໄປ;
5. ທາງຕົວເມືອງ ໃຫ້ປະຕິບັດຕາມແຜນຜັງລວມຂອງຕົວເມືອງ, ສ່ວນທາງສະເພາະໃຫ້ປະຕິບັດຕາມຈຸດພິເສດສະເພາະຂອງແຕ່ລະເສັ້ນທາງ.

ສຳລັບເຂດສະຫງວນຂອງທາງຫຼວງແຫ່ງຊາດທີ່ຈະສ້າງໃໝ່ ໃຫ້ມີລວງກວ້າງ ເບື້ອງລະ ສີ່ສິບຫາ ຫົກສິບ ແມັດ ນັບແຕ່ໃຈກາງທາງອອກໄປ.

ສຳລັບເຂດສະຫງວນຂອງທາງຫຼວງແຕ່ລະປະເພດ ຢູ່ເຂດພູດອຍທີ່ມີພື້ນທີ່ສູງຊັນນັ້ນ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ກຳນົດໂດຍອີງໃສ່ສະພາບຄວາມເປັນຈິງຂອງແຕ່ລະພື້ນທີ່.

**ມາດຕາ 23 (ໃໝ່) ເຂດສະຫງວນຢູ່ເທິງໜ້າດິນຂອງທາງຫຼວງ**

ເຂດສະຫງວນ ຢູ່ເທິງໜ້າດິນຂອງທາງຫຼວງ ມີລວງສູງ ຫ້າແມັດ ນັບແຕ່ໜ້າທາງລົດແລ່ນ, ໜ້າທາງຄົນຍ່າງ ແລະ ໜ້າຂົວ.

**ມາດຕາ 24 (ໃໝ່) ເຂດສະຫງວນຢູ່ໃຕ້ດິນຂອງທາງຫຼວງ**

ເຂດສະຫງວນຢູ່ໃຕ້ດິນຂອງທາງຫຼວງ ແມ່ນ ເຂດທີ່ສະຫງວນໄວ້ ເພື່ອປ້ອງກັນຄວາມປອດໄພ ແລະ ກິດຈະການໃດໜຶ່ງ ຢູ່ໃຕ້ພື້ນທາງ ເປັນຕົ້ນ ທາງຍ່າງລອດໃຕ້ດິນ.

ຖ້າມີຄວາມຈຳເປັນກໍ່ສ້າງກິດຈະການໃດໜຶ່ງ ເຊັ່ນ ການວາງ ທໍ່ນ້ຳປະປາ, ທໍ່ສາຍໂທລະສັບ, ທໍ່ສາຍໄຟຟ້າ, ທໍ່ສົ່ງອາຍແກັສ ແລະ ອື່ນໆ ທີ່ຝັງຢູ່ພື້ນທາງຫຼວງ ແລະ ເຂດສະຫງວນທາງຫຼວງ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ.

## ພາກທີ III
## ກິດຈະການທາງຫຼວງ

**ມາດຕາ 25 (ປັບປຸງ) ກິດຈະການທາງຫຼວງ**

ກິດຈະການທາງຫຼວງ ແມ່ນ ການດຳເນີນການຈັດຕັ້ງປະຕິບັດວຽກງານທາງຫຼວງ ຊຶ່ງປະກອບດ້ວຍ:

1. ການວາງແຜນພັດທະນາທາງຫຼວງ;
2. ການສຶກສາຄວາມເປັນໄປໄດ້ ຂອງໂຄງການ ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງທາງຫຼວງ;
3. ການສຳຫຼວດອອກແບບໂຄງການ ກໍ່ສ້າງແລະ ສ້ອມແປງ ທາງຫຼວງ;
4. ການສະໜອງພື້ນທີ່ໂຄງການ ກໍ່ສ້າງ ແລະ ສ້ອມແປງ ທາງຫຼວງ;
5. ການຈັດຕັ້ງປະຕິບັດໂຄງການ ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ;
6. ການຄວບຄຸມໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ;
7. ການຄຸ້ມຄອງທີ່ດິນທາງຫຼວງ;
8. ການກຳນົດ ມາດຕະຖານເຕັກນິກ, ກຳນົດໝາຍເຕັກນິກ ແລະ ລາຄາຫົວໜ່ວຍກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງທາງຫຼວງ.

## ໝວດທີ 1
## ການວາງແຜນພັດທະນາທາງຫຼວງ

**ມາດຕາ 26 (ປັບປຸງ) ການວາງແຜນພັດທະນາທາງຫຼວງ**

ການວາງແຜນພັດທະນາທາງຫຼວງ ແມ່ນ ການເກັບກຳຂໍ້ມູນ, ການສຶກສາ, ການຄົ້ນຄວ້າ ແລະ ການວິໄຈ ເພື່ອກຳນົດແຜນຍຸດທະສາດພັດທະນາທາງຫຼວງປະເພດຕ່າງໆ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ຮັບໃຊ້ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບໃນແຕ່ລະໄລຍະ.

**ມາດຕາ 27 (ໃໝ່) ການອະນຸມັດໂຄງການກໍ່ສ້າງທາງຫຼວງ**

ໂຄງການກໍ່ສ້າງທາງຫຼວງ ທີ່ນຳໃຊ້ງົບປະມານຂອງລັດ ລວມທັງໂຄງການທີ່ເອກະຊົນລົງທຶນ ຈະຈັດຕັ້ງປະຕິບັດໄດ້ ກໍຕໍ່ເມື່ອໄດ້ຜ່ານຂະບວນການປະເມີນຜົນທາງດ້ານ ເສດຖະກິດ-ສັງຄົມ, ສິ່ງແວດລ້ອມ ແລະ ຖືກກຳນົດໄວ້ໃນແຜນການລົງທຶນຂອງລັດ ທີ່ສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງໄດ້ຮັບຮອງເອົາ.

ສຳລັບໂຄງການກໍ່ສ້າງທາງຊົນນະບົດ ແລະ ທາງສະເພາະທີ່ບໍ່ນຳໃຊ້ງົບປະມານຂອງລັດນັ້ນ ຕ້ອງໄດ້ຂໍການອະນຸມັດ ນຳອົງການຄຸ້ມຄອງວຽກງານທາງຫຼວງ ແລະ ໂດຍການເຫັນດີ ຂອງອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ບົນພື້ນຖານການກວດກາເຕັກນິກ ແລະ ລາຄາຫົວໜ່ວຍກໍ່ສ້າງຕາມລະບຽບການຂອງກະຊວງໂຍທາທິການ ແລະ ຂົນສົ່ງ.

## ໝວດທີ 2
## ການສຶກສາຄວາມເປັນໄປໄດ້ຂອງໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ

**ມາດຕາ 28 (ໃໝ່) ການສຶກສາຄວາມເປັນໄປໄດ້**

ການສຶກສາຄວາມເປັນໄປໄດ້ຂອງໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງທາງຫຼວງ ແມ່ນການຄົ້ນຄວ້າ ແລະ ການວິໄຈທາງດ້ານເສດຖະກິດ-ສັງຄົມ, ເຕັກນິກ, ເຕັກໂນໂລຊີ, ການເງິນ, ວິຊາການ, ແຮງງານກໍ່ສ້າງ, ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມທາງດ້ານທຳມະຊາດ ແລະ ສັງຄົມ ຊຶ່ງສະແດງໃຫ້ເຫັນປະສິດທິຜົນຂອງການລົງທຶນ ໂດຍອີງໃສ່ ປະເພດ, ລັກສະນະ ແລະ ຂະໜາດຂອງ ໂຄງການກໍ່ສ້າງທາງຫຼວງ.

**ມາດຕາ 29 (ໃໝ່) ຄາດໝາຍ ຕົ້ນຕໍ ຂອງການສຶກສາຄວາມເປັນໄປໄດ້**

ຄາດໝາຍຕົ້ນຕໍຂອງການສຶກສາຄວາມເປັນໄປໄດ້ ຂອງໂຄງການ ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງທາງຫຼວງ ມີດັ່ງນີ້:

1. ຜົນປະໂຫຍດສູງສຸດຂອງຊາດ ແລະ ຜູ້ທີ່ຈະໄດ້ຮັບຜົນປະໂຫຍດ ຈາກໂຄງການ;
2. ມູນຄ່າ, ອາຍຸການນຳໃຊ້ ຂອງໂຄງການ;
3. ປະສິດທິຜົນ ດ້ານເສດຖະກິດ, ເຕັກນິກ;
4. ຜົນກະທົບຕໍ່ ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ, ສຸຂະພາບຂອງປະຊາຊົນ ທີ່ເກີດຈາກໂຄງການ;
5. ແຜນການດຳເນີນງານ ແລະ ວິທີການຈັດຕັ້ງປະຕິບັດໂຄງການ.

## ມາດຕາ 30 (ໃໝ່) ບົດລາຍງານການສຶກສາຄວາມເປັນໄປໄດ້

ບົດລາຍງານການສຶກສາຄວາມເປັນໄປໄດ້ ຂອງໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງທາງຫຼວງແມ່ນ ບົດວິພາກທາງດ້ານເສດຖະກິດ, ເຕັກນິກຂອງໂຄງການ ເປັນຕົ້ນ ປະສິດທິຜົນທາງດ້ານເສດຖະກິດ-ສັງຄົມ ແລະ ການລົງທຶນ ຂອງໂຄງການ, ການສຶກສາເຕັກນິກ, ເຕັກໂນໂລຊີ ກ່ຽວກັບການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ລວມທັງຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ.

## ມາດຕາ 31 (ໃໝ່) ເນື້ອໃນຂອງບົດລາຍງານການສຶກສາຄວາມເປັນໄປໄດ້

ບົດລາຍງານການສຶກສາຄວາມເປັນໄປໄດ້ ຂອງ ໂຄງການ ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງທາງຫຼວງ ປະກອບດ້ວຍເນື້ອໃນ ດັ່ງນີ້:

1. ດ້ານແນວທາງນະໂຍບາຍ ຊຶ່ງແມ່ນການສຶກສາກ່ຽວກັບແນວທາງນະໂຍບາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ທີ່ພົວພັນກັບໂຄງການ;

2. ດ້ານການເງິນ ແລະ ຜົນປະໂຫຍດ ຂອງການລົງທຶນ ຊຶ່ງແມ່ນການປະເມີນມູນຄ່າລວມຂອງໂຄງການ, ຄວາມຕ້ອງການທາງດ້ານທຶນຮອນໃນແຕ່ລະໄລຍະ, ບັນດາແຫຼ່ງທຶນ ແລະ ປະສິດທິຜົນທີ່ຈະໄດ້ຮັບຈາກການລົງທຶນ ລວມທັງຜູ້ທີ່ຈະໄດ້ຮັບຜົນປະໂຫຍດ ທາງກົງ ແລະ ທາງອ້ອມຈາກໂຄງການ;

3. ດ້ານເຕັກນິກ ຊຶ່ງແມ່ນການສຶກສາກ່ຽວກັບຂະໜາດຂອງໂຄງການ, ເຕັກນິກ, ເຕັກໂນໂລຊີ ທີ່ເໝາະສົມກັບສະພາວະຄວາມເປັນຈິງທາງດ້ານ ພູມສາດ, ເສດຖະກິດ-ສັງຄົມ ຂອງແຕ່ລະທ້ອງຖິ່ນໃນສະເພາະໜ້າ ແລະ ຍາວນານ ຕະຫຼອດເຖິງ ການຄຸ້ມຄອງ, ການດຳເນີນງານ ແລະ ການປົກປັກຮັກສາ ເພື່ອເຮັດໃຫ້ໂຄງການມີຄວາມຍືນຍົງ;

4. ດ້ານຊັບພະຍາກອນ ຊຶ່ງແມ່ນການສຶກສາ ກ່ຽວກັບຄວາມຕ້ອງການທາງດ້ານວັດສະດຸ, ອຸປະກອນ, ແຮງງານ, ການຝຶກອົບຮົມບຸກຄະລາກອນ ແລະ ອື່ນໆ;

5. ດ້ານການຈັດຕັ້ງ ແລະ ການຄຸ້ມຄອງໂຄງການຊຶ່ງແມ່ນການສຶກສາກ່ຽວກັບການຈັດຕັ້ງທີ່ມີໃນປັດຈຸບັນ, ຄວາມຈຳເປັນ ແລະ ປະສິດທິຜົນໃນການສ້າງຕັ້ງຄະນະຄຸ້ມຄອງໂຄງການສະເພາະເພື່ອຄຸ້ມຄອງການຈັດຕັ້ງປະຕິບັດໂຄງການ;

6. ດ້ານວັດທະນະທຳ, ສັງຄົມ ຊຶ່ງແມ່ນການສຶກສາ ກ່ຽວກັບກຸ່ມເປົ້າໝາຍທີ່ຈະໄດ້ຮັບຜົນປະໂຫຍດຈາກໂຄງການ ເຊັ່ນ ການກະຈາຍລາຍໄດ້ ແລະ ການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນ ລວມທັງການສຶກສາຜົນກະທົບຕໍ່ການຍົກຍ້າຍຖິ່ນຖານ, ການຕັ້ງພູມລຳເນົາໃໝ່, ການປົກປັກຮັກສາຮີດຄອງປະເພນີ, ວັດທະນະທຳທີ່ເປັນມູນມໍຣະດົກອັນລ້ຳຄ່າ ຂອງປະຊາຊົນບັນດາເຜົ່າ;

7. ດ້ານສິ່ງແວດລ້ອມ ຊຶ່ງແມ່ນການສຶກສາ ກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ ເຊັ່ນ ຊີວະນາໆພັນ, ແຫຼ່ງນ້ຳທຳມະຊາດ, ດິນຟ້າອາກາດ, ສຸຂະພາບຂອງປະຊາ

ຊົນ ແລະ ອື່ນໆ ພ້ອມທັງມີມາດຕະການອັນເໝາະສົມ ເພື່ອປ້ອງກັນຜົນກະທົບຕໍ່ສິ່ງແວດລ້ອມດັ່ງກ່າວ;

8. ດ້ານເນື້ອໃນອື່ນໆ ຫາກມີຄວາມສຳຄັນ ແລະ ຈຳເປັນ.

**ມາດຕາ 32 (ໃໝ່) ການຮັບຮອງບົດລາຍງານການສຶກສາຄວາມເປັນໄປໄດ້**

ບົດລາຍງານການສຶກສາຄວາມເປັນໄປໄດ້ ທາງດ້ານເສດຖະກິດ-ສັງຄົມ ຂອງໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງທາງຫຼວງ ຕ້ອງໄດ້ຜ່ານການຮັບຮອງຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ ຕາມແຕ່ລະປະເພດທາງຫຼວງ.

ບົດລາຍງານການສຶກສາຜົນກະທົບທາງດ້ານ ສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ ຕ້ອງໄດ້ຜ່ານການຮັບຮອງຈາກຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

## ໝວດທີ 3
## ການສຳຫຼວດ, ການອອກແບບໂຄງການ ກໍ່ສ້າງ ແລະ ສ້ອມແປງ ທາງຫຼວງ

**ມາດຕາ 33 (ປັບປຸງ) ການສຳຫຼວດ, ການອອກແບບ**

ການສຳຫຼວດໂຄງການກໍ່ສ້າງ ແລະ ສ້ອມແປງ ທາງຫຼວງ ແມ່ນ ການເກັບກຳຂໍ້ມູນລະອຽດດ້ານເຕັກນິກທີ່ຈຳເປັນ ເພື່ອກະກຽມໃຫ້ແກ່ການອອກແບບ.

ການອອກແບບໂຄງການກໍ່ສ້າງ ແລະ ສ້ອມແປງທາງຫຼວງ ແມ່ນ ການສ້າງແຜນຜັງລະອຽດທີ່ຖືກຕ້ອງຕາມ ກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກ ບົນພື້ນຖານການວິໄຈຂໍ້ມູນທີ່ໄດ້ມາຈາກການສຳຫຼວດ ຊຶ່ງປະກອບດ້ວຍ ການສ້າງແຜນຜັງວິສາວະກຳ ແລະ ແຜນຜັງເຕັກນິກຄົບຊຸດ, ກຳນົດໝາຍການນຳໃຊ້ ວັດສະດຸກໍ່ສ້າງ, ການປະເມີນມູນຄ່າກໍ່ສ້າງ ແລະ ການກຳນົດເວລາກໍ່ສ້າງ.

ທຸກໂຄງການກໍ່ສ້າງແລະ ສ້ອມແປງ ທາງຫຼວງ ຕ້ອງມີ ການສຳຫຼວດ, ການອອກແບບ ແລະ ການປະເມີນມູນຄ່າກໍ່ສ້າງ.

**ມາດຕາ 34 (ໃໝ່) ຂັ້ນຕອນການສຳຫຼວດ, ການອອກແບບ**

ການສຳຫຼວດ, ການອອກແບບໂຄງການກໍ່ສ້າງ ແລະ ສ້ອມແປງທາງຫຼວງ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ສຳຫຼວດ, ເກັບກຳ ແລະ ວິໄຈຂໍ້ມູນ;
2. ອອກແບບເບື້ອງຕົ້ນ, ປະເມີນມູນຄ່າແບບລວມໆ;
3. ອອກແບບພື້ນຖານ;
4. ອອກແບບລະອຽດ, ປະເມີນມູນຄ່າໂຄງການ;

5. ກະກຽມເອກະສານປະມູນໂຄງການ.

**ມາດຕາ 35 (ໃໝ່) ຄາດໝາຍ ຕົ້ນຕໍ ຂອງການສຳຫຼວດ ອອກແບບ**

ການສຳຫຼວດ ອອກແບບໂຄງການ ກໍ່ສ້າງ ແລະ ສ້ອມແປງ ທາງຫຼວງ ຕ້ອງສະແດງໃຫ້ເຫັນຄາດໝາຍ ຕົ້ນຕໍ ດັ່ງນີ້:

1. ສອດຄ່ອງກັບຈຸດປະສົງຂອງໂຄງການ;

2. ຕ້ອງຮັບປະກັນຄວາມຊັດເຈນ, ຖືກຕ້ອງຕາມກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກຂອງໂຄງການແຕ່ລະປະເພດ ພ້ອມທັງສົ່ງເສີມການນຳໃຊ້ວັດສະດຸກໍ່ສ້າງພາຍໃນ;

3. ຮັບປະກັນການຄິດໄລ່ບໍລິມາດ ແລະ ມູນຄ່າໂຄງການ ໃຫ້ໃກ້ຄຽງກັບມູນຄ່າຕົວຈິງທີ່ສຸດ ຢູ່ໃນຂອບເຂດ ຫຼຸດລົ້ນບໍ່ເກີນ ສິບຫ້າສ່ວນຮ້ອຍ (15%);

4. ຮັບປະກັນປະສິດທິຜົນທາງດ້ານເສດຖະກິດ-ສັງຄົມ ແລະ ຜົນປະໂຫຍດຂອງຊາດ ແລະ ປະຊາຊົນ;

5. ຮັບປະກັນການອະນຸລັກ, ປົກປັກຮັກສາສິ່ງແວດລ້ອມທຳມະຊາດ ແລະ ສັງຄົມ, ຊັບສິນສາທາລະນະ, ຄວາມປອດໄພທາງດ້ານຊີວິດ ແລະ ຊັບສິນຂອງບຸກຄົນ.

**ມາດຕາ 36 (ໃໝ່) ເນື້ອໃນຂອງການສຳຫຼວດ, ການອອກແບບ**

ການສຳຫຼວດ, ການອອກແບບ ໂຄງການກໍ່ສ້າງ ແລະ ສ້ອມແປງທາງຫຼວງ ປະກອບດ້ວຍເນື້ອໃນຕົ້ນຕໍ ດັ່ງນີ້:

1. ຜົນການເກັບກຳຂໍ້ມູນກ່ຽວກັບສະພາບຕົວຈິງ ທາງດ້ານພູມສາດ, ພູມສັນຖານ, ທໍລະນີສາດ, ອຸທົກກະສາດ ແລະ ແລວທາງ;

2. ກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກ, ແຜນຜັງເຕັກນິກ ແລະ ແຜ່ນແຕ້ມເຕັກນິກທີ່ກ່ຽວຂ້ອງກັບໂຄງປະກອບ, ສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພຂອງທາງຫຼວງ;

3. ການຄິດໄລ່ບໍລິມາດ ແລະ ການປະເມີນມູນຄ່າໂຄງການ.

**ມາດຕາ 37 (ໃໝ່) ການຮັບຮອງເອກະສານການສຳຫຼວດ, ການອອກແບບ**

ເອກະສານການສຳຫຼວດ, ການອອກແບບໂຄງການກໍ່ສ້າງ, ສ້ອມແປງທາງຫຼວງ ປະກອບດ້ວຍ ແຜນຜັງເຕັກນິກ ແລະ ແຜ່ນແຕ້ມລະອຽດ.

ເອກະສານການສຳຫຼວດ, ການອອກແບບ ທີ່ຖືກຕ້ອງຕາມກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກ ແລະ ວັດສະດຸກໍ່ສ້າງ. ການປະເມີນມູນຄ່າ ແລະ ແຜນດຳເນີນງານ ໂຄງການກໍຈະຖືກຮັບຮອງ ໂດຍຂະແໜງການໂຍທາທິການ ແລະ ຂົນສົ່ງຕາມແຕ່ລະປະເພດທາງຫຼວງ.

## ໝວດທີ 4
## ການສະໜອງພື້ນທີ່ໂຄງການກໍ່ສ້າງ ແລະ ສ້ອມແປງ ທາງຫຼວງ

**ມາດຕາ 38 (ໃໝ່) ເງື່ອນໄຂຂອງການສະໜອງພື້ນທີ່ໂຄງການ**

ການສະໜອງພື້ນທີ່ໂຄງການກໍ່ສ້າງ ແລະ ສ້ອມແປງທາງຫຼວງ ຕ້ອງຮັບປະກັນເງື່ອນໄຂ ດັ່ງນີ້:

1. ກຳນົດຂອບເຂດຂອງພື້ນທີ່ ທີ່ຈະສະໜອງໃຫ້ສອດຄ່ອງກັບແຜນການພັດທະນາເສດຖະກິດ-ສັງຄົມ, ແຜນຍຸດທະສາດພັດທະນາທາງຫຼວງ ທີ່ໄດ້ຖືກຮັບຮອງ ແລະ ແຜນຈັດສັນທີ່ດິນແຫ່ງຊາດ;

2. ສ້າງແຜນການຊົດເຊີຍ, ທົດແທນຄວາມເສຍຫາຍ ທີ່ມີຂໍ້ມູນອ້າງອີງຢ່າງຖືກຕ້ອງ, ໜັກແໜ້ນ, ຄົບຖ້ວນ ແລະ ການປະກອບສ່ວນ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການສະໜອງພື້ນທີ່ກ່ອນເລີ່ມຕົ້ນໂຄງການ;

3. ກຳນົດເວລາໃນການສະໜອງພື້ນທີ່ໂຄງການ ໃຫ້ສອດຄ່ອງກັບຕາຕະລາງເວລາຂອງແຜນດຳເນີນງານທີ່ໄດ້ຮັບຮອງ ຫຼື ຕາມການຕົກລົງ ຂອງຂະແໜງການທີ່ກ່ຽວຂ້ອງຂອງລັດ;

4. ຊົດເຊີຍ, ທົດແທນຄວາມເສຍຫາຍ, ດຳເນີນການຍົກຍ້າຍທີ່ຢູ່ອາໄສ ແລະ ສິ່ງກີດຂວາງໂດຍການລົມທົບລະຫວ່າງໂຄງການ ແລະ ອົງການປົກຄອງທ້ອງຖິ່ນ ໃຫ້ສຳເລັດກ່ອນມອບພື້ນທີ່ ໂຄງການ;

5. ມີຄະນະຮັບຜິດຊອບແກ້ໄຂການສະໜອງພື້ນທີ່ ໂດຍແມ່ນອົງການປົກຄອງທ້ອງຖິ່ນເປັນຫົວໜ້າ.

**ມາດຕາ 39 (ປັບປຸງ) ການຊົດເຊີຍ, ທົດແທນຄ່າເສຍຫາຍ**

ເມື່ອລັດ ຕ້ອງການນຳໃຊ້ທີ່ດິນເພື່ອກິດຈະການທາງຫຼວງ, ລັດສາມາດເວນຄືນທີ່ດິນ, ຊົດເຊີຍ ແລະ ທົດແທນຄ່າເສຍຫາຍຕ່າງໆໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີສິດໃຊ້ ຫຼື ສິດນຳໃຊ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ການຊົດເຊີຍ, ທົດແທນຄ່າເສຍຫາຍ ທີ່ເກີດຂຶ້ນຈາກການສະໜອງພື້ນທີ່ໂຄງການ ກໍ່ສ້າງ ແລະ ສ້ອມແປງທາງຫຼວງ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນຜົນປະໂຫຍດລວມຂອງຊາດ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຢ່າງສົມເຫດສົມຜົນ;

2. ຮັບປະກັນໃຫ້ຜູ້ຖືກຍົກຍ້າຍ ມີ ທີ່ຢູ່ອາໄສ ແລະ ຊີວິດການເປັນຢູ່ ທີ່ດີກວ່າລະດັບກ່ອນການຍົກຍ້າຍ;

3. ຮັບປະກັນຄວາມ ຍຸຕິທຳ, ສະເໝີພາບ, ໂປ່ງໃສ ແລະ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ໃນກໍລະນີທີ່ດິນເຫຼືອຈາກກິດຈະການທາງຫຼວງນັ້ນຂະແໜງການໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຮັບຜິດຊອບຢັ້ງຢືນ ແລະ ສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງອອກເອກະສານ ຫຼື ໃບຕາດິນ

ໃໝ່ ພ້ອມທັງປະສານສົມທົບກັບເຈົ້າຂອງໂຄງການ ໃນການຮັບຜິດຊອບຄ່າໃຊ້ຈ່າຍກ່ຽວກັບການດຳເນີນການດັ່ງກ່າວ.

## ໝວດທີ 5
## ການຈັດຕັ້ງປະຕິບັດໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ

### ມາດຕາ 40 (ປັບປຸງ) ການກໍ່ສ້າງທາງຫຼວງ

ການກໍ່ສ້າງທາງຫຼວງ ແມ່ນ ຂະບວນການກໍ່ສ້າງ, ປະກອບ ແລະ ຕິດຕັ້ງສິ່ງປະກອບ, ສິ່ງປ້ອງກັນຄວາມປອດໄພຂອງທາງຫຼວງ ຕາມການອອກແບບ, ແຜນດຳເນີນງານ, ກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກ, ຮັບປະກັນຄຸນນະພາບ, ຄວາມປອດໄພ ແລະ ປົກປັກຮັກສາສິ່ງແວດລ້ອມ ພ້ອມທັງປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

ການກໍ່ສ້າງທາງຫຼວງ ແບ່ງເປັນ ສາມ ປະເພດ ດັ່ງນີ້:

1. ການກໍ່ສ້າງໃໝ່ ແມ່ນ ຂະບວນການຈັດຕັ້ງປະຕິບັດກິດຈະການກໍ່ສ້າງເສັ້ນທາງໃໝ່ ໂດຍເລີ່ມຈາກ ການສຶກສາຄວາມເປັນໄປໄດ້, ການສຳຫຼວດ, ການອອກແບບ, ການດຳເນີນການກໍ່ສ້າງ, ການປະກອບ ແລະ ການຕິດຕັ້ງສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພຂອງທາງຫຼວງ ຈົນກ້າວໄປເຖິງການສຳເລັດແຜນການກໍ່ສ້າງ;

2. ການກໍ່ສ້າງຄືນໃໝ່ ແມ່ນ ຂະບວນການຈັດຕັ້ງປະຕິບັດ ການສຳຫຼວດ, ການອອກແບບ ແລະ ການດຳເນີນການກໍ່ສ້າງໂຄງສ້າງຂອງທັງໝົດຊ່ວງທາງເກົ່າ ແຕ່ຊັ້ນຍົກລະດັບຈົນຮອດຊັ້ນໜ້າທາງ ໃຫ້ໄດ້ຕາມຂະໜາດ ແລະ ມາດຕະຖານເຕັກນິກເດີມ;

3. ການຍົກລະດັບມາດຕະຖານທາງຫຼວງ ແມ່ນ ຂະບວນການຈັດຕັ້ງປະຕິບັດກິດຈະການກໍ່ສ້າງເສັ້ນທາງເກົ່າ ໂດຍເລີ່ມຈາກ ການສຶກສາຄວາມເປັນໄປໄດ້, ການສຳຫຼວດ, ການອອກແບບ, ການດຳເນີນການກໍ່ສ້າງໂຄງສ້າງຂອງທາງຫຼວງ, ການປະກອບ ແລະ ການຕິດຕັ້ງສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພຂອງທາງຫຼວງ ໃຫ້ໄດ້ມາດຕະຖານເຕັກນິກສູງກວ່າເກົ່າ.

### ມາດຕາ 41 (ປັບປຸງ) ການບູລະນະຮັກສາທາງຫຼວງ

ການບູລະນະຮັກສາທາງຫຼວງ ແມ່ນ ການຕິດຕາມກວດກາສະພາບທາງຫຼວງ ເພື່ອຮັບປະກັນໃຫ້ການສັນຈອນ ດຳເນີນໄດ້ເປັນປົກກະຕິ.

ການບູລະນະຮັກສາທາງຫຼວງ ແບ່ງເປັນ ສອງ ປະເພດ ດັ່ງນີ້:

1. ການບູລະນະຮັກສາທາງຫຼວງຕາມປົກກະຕິ;

2. ການບູລະນະຮັກສາທາງຫຼວງຕາມກຳນົດ.

ການບູລະນະຮັກສາທາງຫຼວງຕາມປົກກະຕິ ແມ່ນ ການຕິດຕາມກວດກາສະພາບທາງຫຼວງ ເພື່ອບົວລະບັດຮັກສາຢ່າງເປັນປົກກະຕິ ເຊັ່ນ ຕັດຫຍ້າ, ອະນາໄມໜ້າທາງ, ຮ່ອງລະບາຍນ້ຳ, ທໍ່, ຂົວ ແລະ ສິ່ງປະກອບຕ່າງໆຂອງທາງ.

ການບູລະນະຮັກສາທາງຫຼວງຕາມກຳນົດ ແມ່ນ ການບູລະນະທາງຫຼວງ ຕາມຮອບວຽນທີ່ໄດ້ກຳນົດຕາມມາດຕະຖານຂອງທາງແຕ່ລະປະເພດ ເພື່ອຍືດອາຍຸການນຳໃຊ້ ເຊັ່ນ ການສີດທັບທາງປູຢາງ, ປູທັບທາງຢາງຂີ້ວ ແລະ ການປູຫີນຄືນໃໝ່.

**ມາດຕາ 42 (ປັບປຸງ) ການສ້ອມແປງທາງຫຼວງ**

ການສ້ອມແປງທາງຫຼວງ ແມ່ນ ການປົວແປງທາງ ແລະ ສິ່ງປະກອບຕ່າງໆຂອງທາງທີ່ເປ່ເພເສຍຫາຍໃຫ້ຢູ່ໃນສະພາບ ແລະ ມາດຕະຖານເດີມ ເຊັ່ນ ການຟື້ນຟູ ຫຼື ປັບປຸງທາງເດີມ ແລະ ການສ້ອມແປງສຸກເສີນ.

**ມາດຕາ 43 (ໃໝ່) ການຈັດຕັ້ງປະຕິບັດກ່ອນການດຳເນີນໂຄງການ ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ**

ກ່ອນການດຳເນີນໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ ໃຫ້ປະຕິບັດດັ່ງນີ້:

1. ຄັດເລືອກຜູ້ຮັບເໝົາ ແລະ ທີ່ປຶກສາ ໂດຍຜ່ານການປະມູນ ແລ້ວເຮັດສັນຍາຮັບເໝົາ ແລະ ຄວບຄຸມການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ;
2. ຊົດເຊີຍ, ທົດແທນຄວາມເສຍຫາຍ ໃຫ້ແກ່ຜູ້ທີ່ຖືກຜົນກະທົບຈາກໂຄງການ;
3. ມີແຜນດຳເນີນງານ;
4. ຕິດປ້າຍບອກຂໍ້ມູນກ່ຽວກັບໂຄງການ ເຊັ່ນ ຊື່ໂຄງການ, ເຈົ້າຂອງໂຄງການ, ຜູ້ໃຫ້ທຶນ, ຜູ້ອອກແບບ, ຜູ້ຮັບເໝົາ, ບໍລິສັດທີ່ປຶກສາ, ມູນຄ່າ, ວັນທີ, ເດືອນ, ປີ ເລີ່ມຕົ້ນ ແລະ ສຳເລັດໂຄງການ.

**ມາດຕາ 44 (ໃໝ່) ການປ່ຽນແປງໜ້າວຽກຂອງໂຄງການກໍ່ສ້າງ, ສ້ອມແປງ ທາງຫຼວງ**

ໃນເວລາດຳເນີນການ ກໍ່ສ້າງ, ສ້ອມແປງທາງຫຼວງ ຖ້າມີຄວາມຈຳເປັນຕ້ອງປ່ຽນແປງໜ້າວຽກຂອງໂຄງການ ເນື່ອງຈາກແລວທາງຜ່ານ ບໍລິເວນທີ່ເປັນດິນເປື່ອຍ, ດິນອ່ອນ, ເຂດພູດອຍສູງຊັນ, ຄົດລ້ຽວ ແລະ ເປັນອັນຕະລາຍ, ເຂດທີ່ຕ້ອງຕັດພູທີ່ມີບໍລິມາດ ດິນ ຫຼື ຫີນ ຢ່າງຫຼວງຫຼາຍ, ປ່າສະຫງວນແຫ່ງຊາດ, ບໍລິເວນທີ່ມີການພົບພໍ້ວັດຖຸບູຮານ ຫຼື ບໍ່ແຮ່ ທີ່ມີມູນຄ່າສູງ ແລະ ອື່ນໆ.

ທຸກການປ່ຽນແປງໜ້າວຽກຂອງໂຄງການ ຕ້ອງຮັບປະກັນການປະຢັດ, ຄວາມປອດໄພ ແລະ ມີປະສິດທິຜົນສູງ, ມີຜົນກະທົບຕໍ່ສິ່ງແວດລ້ອມທາງດ້ານທຳມະຊາດ ແລະ ສັງຄົມໜ້ອຍທີ່ສຸດ ພ້ອມທັງຮັບປະກັນຜົນປະໂຫຍດອັນຊອບທຳຂອງປະຊາຊົນ.

ການປ່ຽນແປງໜ້າວຽກຂອງໂຄງການ ທີ່ພົວພັນກັບເຕັກນິກທີ່ມີລັກສະນະສັບສົນ, ມີຜົນກະທົບຕໍ່ງົບປະມານ ແລະ ເວລາ ຕ້ອງຂໍອະນຸມັດຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 45 (ໃໝ່) ການປ້ອງກັນຄວາມປອດໄພ**

ໃນທຸກສະໜາມກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງທາງຫຼວງ ຜູ້ຮັບເໝົາຕ້ອງມີລະບຽບ ແລະ ມາດຕະການປ້ອງກັນຄວາມປອດໄພ ສໍາລັບຜູ້ອອກແຮງງານ ເຊັ່ນ ການນຸ່ງຖື, ການໃສ່ໝວກກັນກະທົບ, ເກີບ, ຖົງມື, ແວ່ນຕາກັນແສງ ລວມທັງການນໍາໃຊ້ວັດຖຸປະກອບອື່ນ ແລະ ຕິດຕັ້ງປ້າຍ, ເຄື່ອງໝາຍ ແລະ ໄຟສັນຍານເຕືອນໄພຕາມເສັ້ນທາງ ເພື່ອຮັບປະກັນຄວາມປອດໄພ ແກ່ຜູ້ນໍາໃຊ້ເສັ້ນທາງ ແລະ ຜູ້ຢູ່ອາໄສບໍລິເວນໃກ້ຄຽງ.

**ມາດຕາ 46 (ໃໝ່) ການຄໍ້າປະກັນໂຄງການ**

ທຸກໂຄງການກໍ່ສ້າງ ແລະ ສ້ອມແປງ ທາງຫຼວງ ຕ້ອງມີໄລຍະຄໍ້າປະກັນແຕ່ ຫົກເດືອນ ຫາ ສອງ ປີ ໃຫ້ເໝາະສົມຕາມປະເພດ, ລັກສະນະ ແລະ ຂະໜາດຂອງໂຄງການ ຊຶ່ງເຈົ້າຂອງໂຄງການສາມາດຫັກເງິນຄໍ້າປະກັນໄວ້ ຫ້າສ່ວນຮ້ອຍ (5%) ຫາ ສິບສ່ວນຮ້ອຍ (10%) ຂອງມູນຄ່າໜ້າວຽກທີ່ໄດ້ຜ່ານການກວດກາ ແລະ ຮັບຮອງ ຕາມທີ່ໄດ້ຕົກລົງກັນໃນສັນຍາ.

ພາຍຫຼັງສິ້ນສຸດໄລຍະຄໍ້າປະກັນ ເຈົ້າຂອງໂຄງການ ແລະ ບໍລິສັດທີ່ປຶກສາຕ້ອງກວດກາເຕັກນິກຂອງໂຄງການດັ່ງກ່າວ, ຖ້າຫາກໂຄງການຍັງຢູ່ໃນສະພາບດີ ແລະ ເປັນທີ່ຍອມຮັບ ເຈົ້າຂອງໂຄງການ ຕ້ອງອອກເອກະສານຢັ້ງຢືນການມອບ-ຮັບຖາວອນໃຫ້ຜູ້ຮັບເໝົາ ເພື່ອນໍາໃຊ້ຢ່າງເປັນທາງການ ຕາມກົດໝາຍ ແລະ ລະບຽບການ ຫຼັງຈາກນັ້ນ ຜູ້ຮັບເໝົາກໍສາມາດຖອນເງິນຄໍ້າປະກັນໄດ້.

## ໝວດທີ 6
## ການຄວບຄຸມໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ

**ມາດຕາ 47 (ໃໝ່) ການຄວບຄຸມໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ**

ການຄວບຄຸມໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ ແມ່ນ ການຕິດຕາມ, ກວດກາທາງດ້ານວິຊາການຂອງວິສະວະກອນທີ່ປຶກສາ ໃນຂະບວນການຈັດຕັ້ງປະຕິບັດໂຄງການຢ່າງເປັນປົກກະຕິ ເພື່ອຮັບປະກັນຄຸນນະພາບຕາມມາດຕະຖານເຕັກນິກ, ສໍາເລັດຕາມກໍານົດເວລາ ແລະ ງົບປະມານຕາມສັນຍາ.

ການຄວບຄຸມໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ ໃຫ້ປະຕິບັດດັ່ງນີ້:

1. ຖືກຕ້ອງຕາມແບບແຜນຜັງ, ກໍານົດໝາຍເຕັກນິກ, ມາດຕະຖານເຕັກນິກ, ແລະ ວັດສະດຸກໍ່ສ້າງທີ່ໄດ້ຮັບຮອງເອົາແລ້ວ;

2. ດໍາເນີນຢ່າງເປັນປະຈໍາ ແລະ ຕໍ່ເນື່ອງ, ຖ້າຫາກພົບເຫັນຂໍ້ຜິດພາດໃນເວລາດໍາເນີນໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ຜູ້ຄວບຄຸມໂຄງການນັ້ນຕ້ອງແຈ້ງໃຫ້ເຈົ້າຂອງໂຄງການພ້ອມທັງວິທີການ ແລະ ມາດຕະການແກ້ໄຂຢ່າງເໝາະສົມ ແລະ ທັນການ;

3. ສ້າງບົດບັນທຶກ ຫຼື ບົດລາຍງານການຄວບຄຸມໂຄງການຢ່າງຖືກຕ້ອງ, ຊັດເຈນ ພ້ອມທັງເກັບຮັກສາເອກະສານ ແລະ ຂໍ້ມູນທີ່ກ່ຽວຂ້ອງໄວ້ເປັນຢ່າງດີ.

ເຈົ້າຂອງໂຄງການຕ້ອງແຕ່ງຕັ້ງ ຫຼື ຈ້າງບຸກຄົນ ຫຼື ບໍລິສັດທີ່ປຶກສາ ທີ່ມີຄວາມສາມາດ ແລະ ປະສົບການທີ່ເໝາະສົມກັບໜ້າວຽກ, ປະເພດ, ຂະໜາດ ແລະ ລະດັບຂອງໂຄງການ ເພື່ອຕິດຕາມ, ກວດກາ ແລະ ຄວບຄຸມໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ.

**ມາດຕາ 48 (ໃໝ່) ການຢັ້ງຢືນຄວາມຖືກຕ້ອງຂອງສິ່ງ ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງທາງຫຼວງ**

ທຸກໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ຕ້ອງໄດ້ຜ່ານການກວດກາຈາກອົງການຄຸ້ມຄອງວຽກງານທາງຫຼວງ ພາຍຫຼັງສຳເລັດການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງທາງຫຼວງ. ຖ້າຫາກເຫັນວ່າການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງທາງຫຼວງ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ຄົບຖ້ວນຕາມການອອກແບບ, ກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກ, ວັດສະດຸກໍ່ສ້າງ ແລະ ເອກະສານອື່ນທີ່ກ່ຽວຂ້ອງ ຕາມທີ່ກຳນົດໄວ້ໃນສັນຍາຮັບເໝົາກໍ່ສ້າງແລ້ວ ອົງການຄຸ້ມຄອງວຽກງານທາງຫຼວງ ກໍຈະອອກໃບຢັ້ງຢືນຄວາມຖືກຕ້ອງຂອງສິ່ງກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ ໃຫ້ເຈົ້າຂອງໂຄງການ.

## ໝວດທີ 7
## ການຄຸ້ມຄອງ ທີ່ດິນທາງຫຼວງ

**ມາດຕາ 49 (ປັບປຸງ) ທີ່ດິນທາງຫຼວງ**

ທີ່ດິນທາງຫຼວງ ແມ່ນ ຂອບເຂດພື້ນທີ່ທາງຫຼວງແຕ່ລະປະເພດທີ່ສະຫງວນໄວ້ ເພື່ອກິດຈະການທາງຫຼວງ ລວມທັງແຫຼ່ງວັດສະດຸກໍ່ສ້າງ ເປັນຕົ້ນ ບໍ່ດິນ, ບໍ່ຫີນ.

**ມາດຕາ 50 (ປັບປຸງ) ການຄຸ້ມຄອງທີ່ດິນທາງຫຼວງ**

ການຄຸ້ມຄອງທີ່ດິນທາງຫຼວງ ແມ່ນ ການສຳຫຼວດ ປັກຫຼັກໝາຍ ຂອບເຂດຂອງທາງຫຼວງ, ແຫຼ່ງວັດສະດຸກໍ່ສ້າງ ນຳສະເໜີຂະແໜງການທີ່ກ່ຽວຂ້ອງພິຈາລະນາ ເພື່ອຂຶ້ນບັນຊີ ແລະ ຈົດທະບຽນເປັນທີ່ດິນທາງຫຼວງ, ປົກປັກຮັກສາທີ່ດິນດັ່ງກ່າວໃຫ້ມີປະສິດທິພາບ, ຮັບປະກັນບໍ່ໃຫ້ມີການບຸກລຸກ ຫຼື ນຳໃຊ້ ທີ່ດິນທາງຫຼວງ ໄປສູ່ເປົ້າໝາຍອື່ນ.

## ໝວດທີ 8

## ມາດຕະຖານເຕັກນິກ, ກຳນົດໝາຍເຕັກນິກ ແລະ ລາຄາຫົວໜ່ວຍກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ

**ມາດຕາ 51 (ໃໝ່) ມາດຕະຖານເຕັກນິກ ແລະ ກຳນົດໝາຍເຕັກນິກ**

ທຸກໂຄງການ ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ ຕ້ອງປະຕິບັດຕາມ ກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກ, ຢ່າງເຂັ້ມງວດ ແລະ ນຳໃຊ້ເຕັກໂນໂລຊີທີ່ເໝາະສົມ.

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄົ້ນຄວ້າ ກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກ ແລະ ສຳລັບວຽກ ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ ໂດຍສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລ້ວນຳສະເໜີລັດຖະບານພິຈາລະນາ.

**ມາດຕາ 52 (ໃໝ່) ລາຄາຫົວໜ່ວຍ**

ລາຄາຫົວໜ່ວຍ ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ ແມ່ນລາຄາທີ່ຄິດໄລ່ຈາກຄ່າໃຊ້ຈ່າຍ ທາງກົງ ແລະ ທາງອ້ອມ ຕໍ່ໜ້າວຽກໃດໜຶ່ງ ຊຶ່ງຄິດໄລ່ຕາມຫົວໜ່ວຍວັດແທກ ເຊັ່ນ ແມັດຍາວ, ຕາແມັດ, ແມັດກ້ອນ ແລະ ອື່ນໆ.

ລາຄາຫົວໜ່ວຍ ໃຫ້ນຳໃຊ້ເພື່ອເປັນບ່ອນອີງ ໃນການວິເຄາະປະສິດທິຜົນ ທາງດ້ານເສດຖະກິດຂອງການລົງທຶນໂຄງການທາງຫຼວງ, ເປັນລາຄາກາງທີ່ສົມເຫດສົມຜົນ, ເປັນເຄື່ອງມືໃນການປະເມີນມູນຄ່າ, ຂື້ນແຜນງົບປະມານ ແລະ ກວດກາໂຄງການ.

ການກຳນົດ ໂຄງປະກອບ ແລະ ຫຼັກການຄິດໄລ່ ລາຄາຫົວໜ່ວຍ ຕ້ອງເປັນເອກະພາບກັນໃນຂອບເຂດທົ່ວປະເທດ ແຕ່ລາຄາຫົວໜ່ວຍຕົວຈິງອາດຈະແຕກຕ່າງກັນໃນແຕ່ລະທ້ອງຖິ່ນ ໂດຍອີງຕາມ ລາຄາວັດສະດຸກໍ່ສ້າງ, ຄ່າແຮງງານ, ຄ່າຂົນສົ່ງ ແລະ ປັດໄຈອື່ນ ທີ່ມີລັກສະນະສະເພາະຂອງແຕ່ລະທ້ອງຖິ່ນ.

ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຄົ້ນຄວ້າ, ກຳນົດໂຄງປະກອບ ແລະ ຫຼັກການຄິດໄລ່ລາຄາຫົວໜ່ວຍ ແລ້ວນຳສະເໜີລັດຖະບານພິຈາລະນາຮັບຮອງ.

## ພາກທີ IV

## ທຸລະກິດກ່ຽວກັບທາງຫຼວງ

**ມາດຕາ 53 (ໃໝ່) ປະເພດທຸລະກິດກ່ຽວກັບທາງຫຼວງ**

ທຸລະກິດກ່ຽວກັບທາງຫຼວງມີ ສີ່ ປະເພດ ດັ່ງນີ້:

1. ການສຳຫຼວດ, ການອອກແບບ;
2. ການບໍລິການທີ່ປຶກສາ;

3. ການວິໄຈວັດສະດຸກໍ່ສ້າງ;

4. ການຮັບເໝົາ ກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທາງຫຼວງ.

**ມາດຕາ 54 (ປັບປຸງ) ການສ້າງຕັ້ງວິສາຫະກິດກ່ຽວກັບທາງຫຼວງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງສ້າງຕັ້ງວິສາຫະກິດກ່ຽວກັບທາງຫຼວງ ຕ້ອງຂໍອະນຸຍາດທາງດ້ານວິຊາການນຳຂະແໜງໂຍທາທິການ ແລະ ຂົນສົ່ງ ແລະ ຍື່ນຄຳຮ້ອງຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າ ເພື່ອພິຈາລະນາຕາມຂັ້ນຕອນ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

**ມາດຕາ 55 (ປັບປຸງ) ເງື່ອນໄຂສ້າງຕັ້ງວິສາຫະກິດກ່ຽວກັບທາງຫຼວງ**

ເງື່ອນໄຂສ້າງຕັ້ງວິສາຫະກິດ ກ່ຽວກັບທາງຫຼວງ ມີດັ່ງນີ້:

1. ມີບົດວິພາກເສດຖະກິດ, ເຕັກນິກ;
2. ມີນັກວິຊາການທີ່ມີປະສົບປະການໃນການດຳເນີນທຸລະກິດ;
3. ມີນັກວິຊາການທີ່ມີຄວາມຮູ້, ຄວາມສາມາດ ແລະ ປະສົບປະການ ທາງດ້ານວິຊາສະເພາະເຕັກນິກ ກ່ຽວກັບທາງຫຼວງໃນຈຳນວນທີ່ເໝາະສົມກັບ ແຕ່ລະປະເພດ ແລະ ຂະໜາດຂອງກິດຈະການກ່ຽວກັບທາງຫຼວງ;
4. ມີທຶນ, ຍານພາຫະນະ, ກົນຈັກ, ອຸປະກອນພຽງພໍ ແລະ ເໝາະສົມກັບແຕ່ລະປະເພດ ແລະ ຂະໜາດ ຂອງກິດຈະການກ່ຽວກັບທາງຫຼວງ;
5. ໃບຢັ້ງຢືນທີ່ຕັ້ງສຳນັກງານ;
6. ໃບຢັ້ງຢືນຖານະການເງິນຈາກທະນາຄານ;
7. ມີຈັນຍາບັນວິຊາຊີບກ່ຽວກັບວຽກງານທາງຫຼວງ.

**ມາດຕາ 56 (ໃໝ່) ການຄັດເລືອກວິສາຫະກິດກ່ຽວກັບທາງຫຼວງ**

ການຄັດເລືອກວິສາຫະກິດກ່ຽວກັບທາງຫຼວງ ຕ້ອງດຳເນີນຜ່ານການປະມູນຕາມກົດໝາຍ ແລະ ລະບຽບການ.

ວິສາຫະກິດກ່ຽວກັບທາງຫຼວງທີ່ເຂົ້າຮ່ວມປະມູນ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ສ້າງຕັ້ງຂຶ້ນຢ່າງຖືກຕ້ອງ ຕາມກົດໝາຍ ແລະ ລະບຽບການ;
2. ມີວິສະວະກອນຂົວທາງ ແລະ ນັກວິຊາການທີ່ກ່ຽວຂ້ອງທີ່ມີຄວາມຮູ້, ຄວາມສາມາດ, ຄຸນສົມບັດ ແລະ ມີປະສົບປະການໃນວຽກງານຢ່າງເໝາະສົມກັບແຕ່ລະປະເພດ ແລະ ຂະໜາດຂອງໂຄງການ;
3. ມີຖານະທາງການເງິນ, ປະຕິບັດພັນທະດ້ານພາສີ, ອາກອນ ຢ່າງເປັນປົກກະຕິ ແລະ ຄົບຖ້ວນ;
4. ມີເງື່ອນໄຂອື່ນ ຕາມທີ່ໄດ້ກຳນົດໄວ້ໃນເອກະສານປະມູນ.

**ມາດຕາ 57 (ໃໝ່) ສັນຍາກ່ຽວກັບກິດຈະການທາງຫຼວງ**

ທຸກກິດຈະການທາງຫຼວງຕ້ອງມີສັນຍາ ລະຫວ່າງ ເຈົ້າຂອງໂຄງການ ກັບວິສາຫະກິດທີ່ໄດ້ຜ່ານການຄັດເລືອກຕາມທີ່ໄດ້ກຳນົດໄວ້ໃນມາດຕາ 56 ຂອງກົດໝາຍສະບັບນີ້ ແລະ ຕ້ອງສອດຄ່ອງ ກັບກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ.

## ພາກທີ V
## ສິດ ແລະ ພັນທະ ຂອງເຈົ້າຂອງໂຄງການ ແລະ ວິສາຫະກິດກ່ຽວກັບທາງຫຼວງ

**ມາດຕາ 58 (ໃໝ່) ສິດ ແລະ ພັນທະ ຂອງເຈົ້າຂອງໂຄງການ**

ເຈົ້າຂອງໂຄງການ ມີ ສິດ ແລະ ພັນທະ ຕົ້ນຕໍ ດັ່ງນີ້:

1. ກະກຽມໂຄງການ, ແຕ່ງຕັ້ງຄະນະກຳມະການປະມູນ ແລະ ຄະນະຮັບຜິດຊອບໂຄງການ;

2. ພິຈາລະນາຮັບຮອງແຜນການປະມູນ, ເອກະສານປະມູນ, ຜົນຂອງການປະມູນ ແລະ ອະນຸມັດໃຫ້ເຊັນສັນຍາ ໃນການຄັດເລືອກເອົາ ບໍລິສັດທີ່ປຶກສາ ແລະ ຜູ້ຮັບເໝົາ;

3. ຊີ້ນຳຄະນະຮັບຜິດຊອບໂຄງການ ໃນການຈັດຕັ້ງປະຕິບັດໂຄງການ ໃຫ້ໄປຕາມແຜນດຳເນີນງານ, ຮັບປະກັນຄຸນນະພາບ ແລະ ງົບປະມານທີ່ໄດ້ອະນຸມັດ;

4. ພິຈາລະນາ ແລະ ຮັບຮອງເອົາແຜນຜັງເຕັກນິກ, ແຜ່ນແຕ້ມເຕັກນິກ ຂອງບໍລິສັດທີ່ປຶກສາ ແລະ ຜູ້ຮັບເໝົາ ລວມທັງການສະເໜີດັດແກ້ແຜນຜັງ ແລະ ແຜ່ນແຕ້ມ ດັ່ງກ່າວໃນກໍລະນີຈຳເປັນກ່ຽວກັບງົບປະມານ, ເຕັກນິກ ແລະ ເວລາ ໃນການຈັດຕັ້ງປະຕິບັດໂຄງການ;

5. ນຳສະເໜີກ່ຽວກັບການດັດແກ້, ໂຈະ, ອວ່າຍທຶນ ແລະ ຍົກເລີກ ໂຄງການ;

6. ຊຳລະຄ່າກໍ່ສ້າງ, ບູລະນະຮັກສາ, ສ້ອມແປງ ແລະ ຄວບຄຸມການກໍ່ສ້າງ ໃຫ້ແກ່ຜູ້ຮັບເໝົາ ແລະ ບໍລິສັດທີ່ປຶກສາ ຕາມສັນຍາທີ່ໄດ້ຕົກລົງກັນ.

**ມາດຕາ 59 (ໃໝ່) ສິດ ແລະ ພັນທະ ຂອງຄະນະຮັບຜິດຊອບໂຄງການ**

ຄະນະຄຸ້ມຄອງໂຄງການ ມີ ສິດ ແລະ ພັນທະ ຕົ້ນຕໍ ດັ່ງນີ້:

1. ຊ່ວຍຄະນະກຳມະການປະມູນ ໃນການຈັດຕັ້ງການປະມູນເອົາບໍລິສັດທີ່ປຶກສາ ແລະ ຜູ້ຮັບເໝົາ;

2. ແຈ້ງ, ແນະນຳ ຫຼື ສັ່ງໂຈະຊົ່ວຄາວການຈັດຕັ້ງປະຕິບັດໂຄງການໃຫ້ ຜູ້ຮັບເໝົາ ຫຼື ບໍລິສັດທີ່ປຶກສາ ທີ່ບໍ່ປະຕິບັດຕາມສັນຍາທີ່ໄດ້ຕົກລົງກັນ ແລ້ວລາຍງານຕໍ່ເຈົ້າຂອງໂຄງການໂດຍດ່ວນ;

3. ຕິດຕາມ, ກວດກາການດຳເນີນງານຂອງຜູ້ຮັບເໝົາ ແລະ ບໍລິສັດທີ່ປຶກສາ;

4. ລາຍງານສະພາບການຈັດຕັ້ງປະຕິບັດໂຄງການ ແຕ່ລະໄລຍະໃຫ້ເຈົ້າຂອງໂຄງການຢ່າງເປັນປະຈຳ;

5. ສະເໜີປ່ຽນ ຫົວໜ້າທີມຂອງບໍລິສັດທີ່ປຶກສາ ແລະ ບໍລິສັດກໍ່ສ້າງ ພ້ອມດ້ວຍວິຊາການທີ່ບໍ່ສາມາດປະຕິບັດໜ້າທີ່ຕາມການມອບໝາຍ;

6. ເກັບມ້ຽນສຳນວນເອກະສານ ຂອງໂຄງການ ເຊັ່ນ ບົດວິພາກເສດຖະກິດ, ເຕັກນິກ, ຜົນການວິໄຈດິນ ແລະ ວັດສະດຸກໍ່ສ້າງ, ແຜນຜັງເຕັກນິກ, ແຜ່ນແຕ້ມເຕັກນິກ ທີ່ໄດ້ຖືກຮັບຮອງ; ແຜນຜັງເຕັກນິກ, ແຜ່ນແຕ້ມເຕັກນິກກໍ່ສ້າງຕົວຈິງ ແລະ ເອກະສານອື່ນທີ່ກ່ຽວຂ້ອງ.

## ມາດຕາ 60 (ໃໝ່) ສິດ ແລະ ພັນທະ ຂອງບໍລິສັດທີ່ປຶກສາ

ບໍລິສັດທີ່ປຶກສາ ມີ ສິດ ແລະ ພັນທະ ຕົ້ນຕໍ ດັ່ງນີ້:

1. ກະກຽມເອກະສານປະມູນ, ຮ່າງສັນຍາຮັບເໝົາກໍ່ສ້າງ ແລະ ເອກະສານອື່ນ ເພື່ອຮັບໃຊ້ໃຫ້ແກ່ໂຄງການ;

2. ກວດກາແຜນການ, ຄວບຄຸມການກໍ່ສ້າງ ແລະ ແນະນຳວິທີການໃຫ້ຜູ້ຮັບເໝົາໃຫ້ຖືກຕ້ອງຕາມ ແຜນຜັງເຕັກນິກ, ແຜ່ນແຕ້ມເຕັກນິກ, ກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກ;

3. ລາຍງານໃຫ້ເຈົ້າຂອງໂຄງການ ກ່ຽວກັບການບໍ່ຮັບຮອງເອົາໜ້າວຽກໃດໜຶ່ງ ຂອງຜູ້ຮັບເໝົາທີ່ບໍ່ຖືກຕ້ອງຕາມ ກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກ;

4. ຕິດຕາມ, ກວດກາ ແລະ ສະຫຼຸບ ບໍລິມາດແຕ່ລະໜ້າວຽກຢ່າງລະອຽດໃນແຕ່ລະໄລຍະ ເພື່ອຢັ້ງຢືນຄວາມຖືກຕ້ອງໃຫ້ແກ່ການຊຳລະຄ່າກໍ່ສ້າງ;

5. ລາຍງານຄວາມຄືບໜ້າຂອງໜ້າວຽກ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ບັນຫາອື່ນຂອງໂຄງການໃຫ້ເຈົ້າຂອງໂຄງການເປັນແຕ່ລະໄລຍະ;

6. ເກັບຮັກສາ ແລະ ມອບສຳນວນເອກະສານໂຄງການ ໃຫ້ເຈົ້າຂອງໂຄງການ;

7. ໄດ້ຮັບຄ່າຄວບຄຸມການກໍ່ສ້າງ ຕາມມູນຄ່າທີ່ໄດ້ກຳນົດໄວ້ໃນສັນຍາ.

## ມາດຕາ 61 (ໃໝ່) ສິດ ແລະ ພັນທະ ຂອງຜູ້ຮັບເໝົາ

ຜູ້ຮັບເໝົາ ມີ ສິດ ແລະ ພັນທະ ຕົ້ນຕໍ ດັ່ງນີ້:

1. ສ້າງແຜນດຳເນີນງານ ນັບແຕ່ວັນເລີ່ມຕົ້ນຮອດວັນສຳເລັດ ແລ້ວສະເໜີຕໍ່ບໍລິສັດທີ່ປຶກສາ ແລະ ຄະນະຮັບຜິດຊອບໂຄງການ ເພື່ອຮັບຮອງເອົາ;

2. ດຳເນີນໂຄງການ ໃຫ້ຖືກຕ້ອງຕາມແຜນຜັງເຕັກນິກ, ແຜ່ນແຕ້ມເຕັກນິກ, ກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກ ແລະ ວັດສະດຸກໍ່ສ້າງ ຕາມທີ່ກຳນົດໄວ້ໃນສັນຍາ;

3. ແຈ້ງໃຫ້ບໍລິສັດທີ່ປຶກສາ ແລະ ຄະນະຮັບຜິດຊອບໂຄງການ ຊາບລ່ວງໜ້າກ່ອນປະຕິບັດໜ້າວຽກທີ່ສຳຄັນເພື່ອຕິດຕາມ ແລະ ກວດກາຕົວຈິງ;

4. ຄຸ້ມຄອງສະໜາມກໍ່ສ້າງ ແລະ ປະຕິບັດຕາມລະບຽບການກ່ຽວກັບຄວາມປອດໄພ ເປັນຕົ້ນ ຕິດຕັ້ງປ້າຍເຕືອນ, ປ້າຍສັນຍານ, ໄຟສັນຍານ, ສ້າງທາງເວັ້ນ ແລະ ມາດຕະການປ້ອງກັນຄວາມປອດໄພທີ່ຈຳເປັນ ລວມທັງຮັບປະກັນຄວາມເປັນລະບຽບຮຽບຮ້ອຍ ແລະ ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມໜ້ອຍທີ່ສຸດ;

5. ອຳນວຍຄວາມສະດວກ ໃຫ້ແກ່ຜູ້ນຳໃຊ້ທາງຫຼວງ ແລະ ຜູ້ຢູ່ອາໄສບໍລິເວນໃກ້ຄຽງ ໃນໄລຍະດຳເນີນການກໍ່ສ້າງ ພ້ອມທັງຮັບຜິດຊອບຕໍ່ຊີວິດ ແລະ ຊັບສິນ ຂອງຜູ້ນຳໃຊ້ທາງຫຼວງ ແລະ ຜູ້ຢູ່ອາໄສບໍລິເວນໃກ້ຄຽງ ໃນກໍລະນີທີ່ເກີດອຸປະຕິເຫດຍ້ອນຄວາມປະໝາດເລີ່ນເລີ້ຂອງຕົນ;

6. ສະໜອງ ຂໍ້ມູນ ແລະ ເອກະສານທີ່ຈຳເປັນ ໃຫ້ແກ່ຄະນະຮັບຜິດຊອບໂຄງການ ຫຼື ຄະນະກຳມະການກວດກາ ຕາມກຳນົດເວລາທີ່ໄດ້ຕົກລົງກັນ;

7. ສະເໜີດັດແກ້ ແຜນຜັງເຕັກນິກ ແລະ ແຜ່ນແຕ້ມເຕັກນິກ ໃນກໍລະນີຈຳເປັນກ່ຽວກັບ ງົບປະມານ, ເຕັກນິກ ແລະ ເວລາ ໃນການຈັດຕັ້ງປະຕິບັດໂຄງການ;

8. ຮັບຜິດຊອບຕໍ່ຄວາມເສຍຫາຍທີ່ເກີດຂຶ້ນ ເນື່ອງຈາກການບໍ່ປະຕິບັດຕາມສັນຍາ, ປະຕິບັດບໍ່ຖືກຕ້ອງຕາມ ແຜນຜັງເຕັກນິກ, ແຜ່ນແຕ້ມເຕັກນິກ, ກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກທີ່ໄດ້ຕົກລົງກັນ;

9. ເກັບຮັກສາ ແລະ ມອບສຳນວນເອກະສານໂຄງການ ໃຫ້ຄະນະຮັບຜິດຊອບໂຄງການ;

10. ໄດ້ຮັບຄ່າກໍ່ສ້າງ ຕາມມູນຄ່າທີ່ໄດ້ກຳນົດໄວ້ໃນສັນຍາ.

**ມາດຕາ 62 (ໃໝ່) ສິດ ແລະ ພັນທະ ຂອງບໍລິສັດສຳຫຼວດ, ອອກແບບ, ວິໄຈວັດສະດຸກໍ່ສ້າງ**

ບໍລິສັດສຳຫຼວດ, ອອກແບບ, ວິໄຈວັດສະດຸກໍ່ສ້າງ ມີ ສິດ ແລະ ພັນທະ ຕົ້ນຕໍ ດັ່ງນີ້:

1. ເກັບກຳ, ວິໄຈຂໍ້ມູນ ແລະ ວັດສະດຸກໍ່ສ້າງ ທີ່ຈຳເປັນຢ່າງຄົບຖ້ວນ ເພື່ອເປັນພື້ນຖານໃຫ້ແກ່ການອອກແບບ;

2. ອອກແບບ, ຄິດໄລ່ໂຄງສ້າງວິສະວະກຳ, ຂະຫຍາຍແຜ່ນແຕ້ມເຕັກນິກ ແລະ ແຜ່ນແຕ້ມຊິ້ນສ່ວນລະອຽດຂອງໂຄງສ້າງ;

3. ກຳນົດການນຳໃຊ້ວັດສະດຸກໍ່ສ້າງ, ປະເມີນມູນຄ່າການກໍ່ສ້າງ ແລະ ສ້າງແຜນດຳເນີນງານລະອຽດ;

4. ພິຈາລະນາ ປັບປຸງຄືນ ແຜນຜັງເຕັກນິກ ແລະ ແຜ່ນແຕ້ມເຕັກນິກ ທີ່ເຫັນວ່າບໍ່ເໝາະສົມຕາມການສະເໜີ ຂອງຄະນະຮັບຜິດຊອບໂຄງການ;

5. ຮັບຜິດຊອບຕໍ່ ກົດໝາຍ ແລະ ລະບຽບການ ກ່ຽວກັບຜົນຂອງການສຳຫຼວດ, ການອອກແບບ ແລະ ການວິໄຈວັດສະດຸກໍ່ສ້າງຂອງຕົນ.

## ພາກທີ VI
## ສະມາຄົມວິຊາຊີບກໍ່ສ້າງຂົວທາງ

**ມາດຕາ 63 (ໃໝ່) ທີ່ຕັ້ງ ແລະ ພາລະບົດບາດ ຂອງສະມາຄົມວິຊາຊີບກໍ່ສ້າງຂົວທາງ**

ສະມາຄົມວິຊາຊີບກໍ່ສ້າງຂົວທາງ ແມ່ນ ອົງການຈັດຕັ້ງສັງຄົມໜຶ່ງ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ຊຶ່ງໄດ້ຮັບການສ້າງຕັ້ງຈາກ ກະຊວງພາຍໃນ, ມີພາ

ລະບົດບາດເຕົ້າໂຮມ ຄວາມສາມັກຄີ, ສະຕິປັນຍາຂອງບັນດາ ນັກວິສະວະກອນ, ນັກວິຊາການ ແລະ ຜູ້ດຳເນີນທຸລະກິດກ່ຽວກັບທາງຫຼວງພາຍໃຕ້ລັດຖະທຳມະນູນ, ກົດໝາຍ, ລະບຽບການ ແລະ ຈັນຍາບັນວິຊາຊີບເພື່ອ ປົກປ້ອງ, ສົ່ງເສີມ ແລະ ພັດທະນາວິຊາຊີບຂອງຕົນ ປະກອບສ່ວນເຂົ້າໃນການສ້າງຄຸນປະໂຫຍດໃຫ້ແກ່ສັງຄົມ ແລະ ການສ້າງສາພັດທະນາປະເທດຊາດ.

**ມາດຕາ 64 (ໃໝ່) ສິດ ແລະ ໜ້າທີ່ ຂອງສະມາຄົມວິຊາຊີບກໍ່ສ້າງຂົວທາງ**

ສະມາຄົມວິຊາຊີບກໍ່ສ້າງຂົວທາງ ມີສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:

1. ສ້າງກົດລະບຽບພາຍໃນຂອງຕົນ, ໂຄສະນາ, ເຜີຍແຜ່ນະໂຍບາຍ, ກົດໝາຍ, ລະບຽບການ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ກ່ຽວກັບທາງຫຼວງ;

2. ກຳນົດກົດຈັນຍາບັນ ແລະ ລະບຽບການ ເພື່ອຄຸ້ມຄອງ ນັກວິສະວະກອນ, ນັກວິຊາການ ແລະ ຜູ້ດຳເນີນທຸລະກິດກ່ຽວກັບທາງຫຼວງ;

3. ຍົກລະດັບ, ບຳລຸງສ້າງ ແລະ ສົ່ງເສີມສະມາຊິກຂອງຕົນ ໃນການພັດທະນາຄວາມຮູ້ຄວາມສາມາດໃນການປະຕິບັດໜ້າທີ່ວຽກງານ ແລະ ວິຊາຊີບກ່ຽວກັບທາງຫຼວງໃຫ້ມີຄວາມກ້າວໜ້າ ແລະ ມີປະສິດທິຜົນ;

4. ຄຸ້ມຄອງ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງສະມາຊິກຕົນ ບົນພື້ນຖານນະໂຍບາຍ, ກົດໝາຍ ແລະ ລະບຽບການ;

5. ເປັນເຈົ້າການໃນການ ສຶກສາ, ຄົ້ນຄວ້າ, ສົ່ງເສີມ, ນຳໃຊ້ວິທະຍາສາດ, ເຕັກນິກ ແລະ ເຕັກໂນໂລຊີ ທີ່ທັນສະໄໝເຂົ້າໃນການພັດທະນາວຽກງານທາງຫຼວງ;

6. ປະສານສົມທົບ ແລະ ພົວພັນຮ່ວມມື ກັບສະມາຄົມວິຊາຊີບອື່ນ ທັງພາຍໃນ ແລະ ຕ່າງປະເທດ;

7. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຂອງຕົນ ໃຫ້ຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ.

## ພາກທີ VII
## ຄ່າທຳນຽມ ແລະ ຄ່າບໍລິການ

**ມາດຕາ 65 (ປັບປຸງ) ຄ່າທຳນຽມ ແລະ ຄ່າບໍລິການທາງຫຼວງ**

ຄ່າທຳນຽມ ແລະ ຄ່າບໍລິການທາງຫຼວງ ແມ່ນ ລາຍຮັບທີ່ໄດ້ຈາກກິດຈະການທາງຫຼວງ ແລະ ການນຳໃຊ້ທາງຫຼວງ ຕາມກົດໝາຍ ແລະ ລະບຽບການ ເຊັ່ນ ຄ່າຂຶ້ນທະບຽນ, ຄ່າທຳນຽມທາງ, ຄ່າຜ່ານທາງ, ຄ່າຂ້າມບັກ, ຄ່າຜ່ານຂົວ ແລະ ຄ່າອື່ນໆ ກ່ຽວກັບທາງຫຼວງ.

**ມາດຕາ 66 (ປັບປຸງ) ການເກັບ, ອັດຕາ ຄ່າທຳນຽມ ແລະ ຄ່າບໍລິການທາງຫຼວງ**

ການເກັບ, ອັດຕາ ຄ່າທຳນຽມ ແລະ ຄ່າບໍລິການ ທາງຫຼວງ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ທີ່ໄດ້ກຳນົດໄວ້ໃນແຕ່ລະໄລຍະ.

## ພາກທີ VIII

## ກອງທຶນທາງ

**ມາດຕາ 67 (ໃໝ່) ກອງທຶນທາງ**

ກອງທຶນທາງ ຂຽນຫຍໍ້ວ່າ: "ກທທ" ແມ່ນ ກອງທຶນຂອງລັດທີ່ສ້າງຕັ້ງຂຶ້ນ ເພື່ອສະສົມທຶນ ຈາກທັງພາຍໃນ ແລະ ຕ່າງປະເທດ ນຳໃຊ້ເຂົ້າໃນວຽກງານ ບູລະນະຮັກສາ, ສ້ອມແປງທາງຫຼວງ ທຸກປະເພດ ແລະ ວຽກງານຄວາມປອດໄພຕາມທາງຫຼວງທຸກປະເພດ ແນໃສ່ເຮັດໃຫ້ການສັນຈອນ ມີຄວາມສະດວກ, ປອດໄພ ແລະ ໂລ່ງລ່ຽນ; ສຳລັບທຶນທີ່ລັດສະໜອງໃຫ້ໂຄງການ ກໍ່ສ້າງ, ບູລະ ນະຮັກສາ ແລະ ການສ້ອມແປງ ທາງຫຼວງ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ.

**ມາດຕາ 68 (ໃໝ່) ແຫຼ່ງກອງທຶນທາງ**

ກອງທຶນທາງ ໄດ້ມາຈາກແຫຼ່ງທຶນ ດັ່ງນີ້:

1. ຄ່າທຳນຽມໃຊ້ນ້ຳມັນ;
2. ຄ່າທຳນຽມລົດຜ່ານແດນ ຕາມສັນຍາສາກົນ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ;
3. ຄ່າທຳນຽມທາງປະຈຳປີ;
4. ຄ່າບໍລິການຜ່ານຂົວທາງ;
5. ຄ່າປະມູນຂາຍປ້າຍທະບຽນລົດ;
6. ຄ່າປັບໃໝຜູ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບ ການຈະລາຈອນທາງບົກ, ການຂົນສົ່ງທາງບົກ ແລະ ທາງຫຼວງ;
7. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຂອງພາກລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ;
8. ແຫຼ່ງອື່ນກ່ຽວກັບການນຳໃຊ້ທາງຫຼວງ.

**ມາດຕາ 69 (ໃໝ່) ການຄຸ້ມຄອງ ແລະ ການນຳໃຊ້ ກອງທຶນທາງ**

ການຄຸ້ມຄອງ ແລະ ການນຳໃຊ້ ກອງທຶນທາງ ຕ້ອງສອດຄ່ອງກັບກົດໝາຍວ່າດ້ວຍງົບປະມານແຫ່ງລັດ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

# ພາກທີ IX
# ຂໍ້ຫ້າມ

**ມາດຕາ 70 (ໃໝ່) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດກ່ຽວກັບທາງຫຼວງ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ;

2. ປຸກສ້າງ, ກໍ່ສ້າງກິດຈະການໃດໜຶ່ງ ທີ່ເປັນກິດຈະການຊົ່ວຄາວ ຫຼື ຖາວອນໃນຂອບເຂດສະຫງວນທາງຫຼວງ ເປັນຕົ້ນ ກໍ່ສ້າງ ເຮືອນ, ອາຄານ, ບ່ອນຈອດລົດ ກວມຮ່ອງລະບາຍນໍ້າ;

3. ຂົນສິ່ງວັດສະດຸກໍ່ສ້າງ ຫຼື ສິ່ງອື່ນ ເປັນຕົ້ນ ດິນ, ຫີນແຮ່, ຫີນພູ ແລະ ຊາຍ ທີ່ສ້າງຄວາມເປິະເປື້ອນໃສ່ທາງຫຼວງ;

4. ບັນທຸກນໍ້າໜັກເກີນແລ່ນເທິງໜ້າທາງຫຼວງແຕ່ລະປະເພດ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງທາງຫຼວງ;

5. ຂັດຂວາງ, ບໍ່ອຳນວຍຄວາມສະດວກ ຫຼື ບໍ່ໃຫ້ການຮ່ວມມື ແກ່ການດຳເນີນການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ;

6. ມ້າງເພ, ທຳລາຍໂຄງປະກອບ, ສິ່ງປະກອບ, ສິ່ງປ້ອງກັນຄວາມປອດໄພ ຂອງທາງຫຼວງ ແລະ ຕັດຕົ້ນໄມ້ຕາມເຂດສະຫງວນຂອງທາງ;

7. ຊື້ຂາຍ ສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພ ຂອງທາງຫຼວງ ເຊັ່ນ ຝາປິດຮູລະບາຍນໍ້າ, ຂຸມພັກນໍ້າ, ຊິ້ນສ່ວນຂົວ, ຫຼັກປ້າຍສັນຍານ ແລະ ອື່ນໆ;

8. ຖົມຮ່ອງລະບາຍນໍ້າແຄມທາງ, ຖົມດິນ ສູງກ່ວາໜ້າທາງ, ໃສ່ໜ້າທາງ ແລະ ວາງສິ່ງກີດຂວາງຕ່າງໆ, ຖອກນໍ້າມັນ, ດັງໄຟ, ຖິ້ມສິ່ງເປິະເປື້ອນໃສ່ໜ້າທາງ, ຮ່ອງລະບາຍນໍ້າ, ເຂດສະຫງວນ ແລະ ເຂດປອດໄພ ຂອງທາງຫຼວງ;

9. ວາງເຄື່ອງຂາຍ, ວາງເຄື່ອງໝາຍ, ປະຖິ້ມທ່ອນໄມ້, ກ້ອນຫີນ ແລະ ສິ່ງກີດຂວາງຕາມທາງຫຼວງ ໂດຍບໍ່ໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງທາງຫຼວງ;

10. ຈັດພິທີຕາມທາງຫຼວງ ໂດຍບໍ່ໄດ້ຮັບອະນຸຍາດຈາກ ຂະແໜງການໂຍທາທິການ ແລະ ຂົນສົ່ງ;

11. ເຄື່ອນຍ້າຍຍານພະຫະນະຕີນເຫຼັກ ຫຼື ຄຽນດ້ວຍໂສ້ແລ່ນເທິງໜ້າທາງປູຢາງ, ປູເບຕົງ ຫຼື ໜ້າທາງອື່ນ ໂດຍບໍ່ມີການປ້ອງກັນໜ້າທາງ;

12. ລ້ຽງ, ປ່ອຍສັດລ້ຽງ ແລະ ເຄື່ອນຍ້າຍສັດລ້ຽງຕາມທາງຫຼວງ ໂດຍບໍ່ມີຜູ້ຄວບຄຸມ;

13. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 71 (ໃໝ່) ຂໍ້ຫ້າມສຳລັບພະນັກງານ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ**

ຫ້າມພະນັກງານ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ, ເປັນທີ່ປຶກສາ ຫຼື ເປັນພະນັກງານວິຊາການ ໃຫ້ຜູ້ຮັບເໝົາໂຄງການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງ ທີ່ພົວພັນກັບຄວາມຮັບຜິດຊອບຂອງຕົນ;

2. ເປີດເຜີຍຂໍ້ມູນກ່ຽວກັບການປະມູນ;

3. ຂໍເອົາ, ທວງເອົາ ຫຼື ຮັບສິນບົນກ່ຽວກັບການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງທາງຫຼວງ;

4. ລຳອຽງ, ສົມຮູ້ຮ່ວມຄິດ ແລະ ປອມແປງເອກະສານຂໍ້ມູນ;

5. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ ແລະ ການກະທຳທີ່ບໍ່ຖືກຕ້ອງຂອງຜູ້ຮັບເໝົາ, ກົດໜ່ວງຖ່ວງດຶງເອກະສານກ່ຽວກັບການກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງທາງຫຼວງ.

**ມາດຕາ 72 (ໃໝ່) ຂໍ້ຫ້າມສຳລັບເຈົ້າຂອງໂຄງການ**

ຫ້າມເຈົ້າຂອງໂຄງການ ມີພຶດຕິກຳ ດັ່ງນີ້:

1. ສົມຮູ້ຮ່ວມຄິດກັບ ພະນັກງານ, ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຫຼື ຜູ້ຮັບເໝົາ, ບໍລິສັດທີ່ປຶກສາ ຫຼື ວິສະວະກອນ ໃນການຢັ້ງຢືນ ແລະ ຮັບຮອງເອົາກິດຈະການທາງຫຼວງ ທີ່ບໍ່ໄດ້ມາດຕະຖານ;

2. ຮັບສິນບົນຈາກ ຜູ້ຮັບເໝົາ, ບໍລິສັດທີ່ປຶກສາ ແລະ ບຸກຄົນອື່ນ ທີ່ກ່ຽວກັບກິດຈະການທາງຫຼວງ;

3. ຊັກຊ້າໃນການຊຳລະຄ່າກິດຈະການທາງຫຼວງ ທີ່ໄດ້ເຮັດສຳເລັດແລ້ວ ເວັ້ນເສຍແຕ່ໄດ້ຕົກລົງກັນໃນສັນຍາ;

4. ກົດໜ່ວງຖ່ວງດຶງຜູ້ຮັບເໝົາ ກ່ຽວກັບວິທີການ ແລະ ມາດຕະການແກ້ໄຂບັນຫາທີ່ເກີດຂຶ້ນໃນກິດຈະການທາງຫຼວງ;

5. ເປີດເຜີຍຂໍ້ມູນ ຂອງໂຄງການກິດຈະການທາງຫຼວງ ໂດຍບໍ່ໄດ້ຮັບອະນຸຍາດ;

6. ເມີນເສີຍຕໍ່ການຕິດຕາມ ແລະ ກວດກາ ການປະຕິບັດກິດຈະການທາງຫຼວງ ຂອງຜູ້ຮັບເໝົາ.

**ມາດຕາ 73 (ໃໝ່) ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດກ່ຽວກັບ ທາງຫຼວງ**

ຫ້າມຜູ້ດຳເນີນທຸລະກິດ ກ່ຽວກັບທາງຫຼວງ ມີພຶດຕິກຳ ດັ່ງນີ້:

1. ກໍ່ສ້າງໂດຍບໍ່ຖືກຕ້ອງຕາມ ແຜນຜັງເຕັກນິກ, ແຜ່ນແຕ້ມເຕັກນິກ, ກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກ;

2. ລອກແບບແຜນຜັງວິສະວະກຳຂອງບຸກຄົນອື່ນ ເພື່ອສະແຫວງຫາຜົນປະໂຫຍດສ່ວນຕົວທາງດ້ານການຄ້າ;

3. ສຳຫຼວດ, ອອກແບບ, ກໍ່ສ້າງ, ຄວບຄຸມ ແລະ ກວດກາ ໂຄງການ ກໍ່ສ້າງ, ສ້ອມແປງທາງຫຼວງ ໂດຍຜູ້ດຽວກັນ;

4. ສົມຮູ້ຮ່ວມຄິດກັບເຈົ້າຂອງໂຄງການ ຫຼື ຜູ້ຮັບເໝົາ ກ່ຽວກັບກິດຈະການທາງຫຼວງ ເພື່ອສະແຫວງຫາຜົນປະໂຫຍດສ່ວນຕົວ;

5. ດຳເນີນການກໍ່ສ້າງໂດຍບໍ່ມີມາດຕະການ ປ້ອງກັນຄວາມປອດໄພ ແລະ ການປົກປັກຮັກສາສິ່ງແວດລ້ອມ;

6. ມອບ, ຂາຍ ຫຼື ໂອນ ໂຄງການກ່ຽວກັບທາງຫຼວງໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງໂຄງການ;

7. ຂຸດດິນ, ກອງດິນ ຫຼື ຖົມດິນ ຢູ່ນອກຂອບເຂດພື້ນທີ່ ທີ່ໄດ້ກຳນົດໄວ້ໃນເວລາດຳເນີນການກໍ່ສ້າງ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ;

8. ປ່ອຍປະລະເລີຍວຽກງານ ຫຼື ໂຄງການກໍ່ສ້າງ ທີ່ຕົນໄດ້ເຊັນສັນຍາກັບເຈົ້າຂອງໂຄງການ;

9. ປອມແປງເອກະສານ ຫຼື ໃຫ້ຂໍ້ມູນກ່ຽວກັບໂຄງການທາງຫຼວງ ທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ;

10. ໃຫ້ສິນບົນ ກ່ຽວກັບການດຳເນີນທຸລະກິດກ່ຽວກັບທາງຫຼວງ.

## ພາກທີ X
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 74 (ໃໝ່) ຮູບການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງ ອາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:

1. ການໄກ່ເກ່ຍ ຫຼື ການປະນີປະນອມກັນ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດ;
4. ການຮ້ອງຟ້ອງຕໍ່ສານປະຊາຊົນ;
5. ການແກ້ໄຂທີ່ມີລັກສະນະສາກົນ.

### ມາດຕາ 75 (ໃໝ່) ການໄກ່ເກ່ຍ ຫຼື ການປະນີປະນອມກັນ

ໃນກໍລະນີທີ່ເກີດຂໍ້ຂັດແຍ່ງ ໃນການດຳເນີນທຸລະກິດກ່ຽວກັບທາງຫຼວງ ຄູ່ກໍລະນີສາມາດເຈລະຈາ, ໄກ່ເກ່ຍ ແລະ ປະນີປະນອມກັນ.

### ມາດຕາ 76 (ໃໝ່) ການແກ້ໄຂທາງດ້ານບໍລິຫານ

ໃນກໍລະນີເກີດຂໍ້ຂັດແຍ່ງ ໃນການດຳເນີນທຸລະກິດກ່ຽວກັບທາງຫຼວງ ຄູ່ກໍລະນີມີສິດສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງ ບ່ອນທີ່ຕົນໄດ້ຮັບອະນຸຍາດນັ້ນ ເພື່ອພິຈາລະນາແກ້ໄຂຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 77 (ໃໝ່) ການແກ້ໄຂໂດຍຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີທີ່ເກີດຂໍ້ຂັດແຍ່ງທາງດ້ານເສດຖະກິດ ເນື່ອງຈາກການດຳເນີນກິດຈະການກ່ຽວກັບທາງຫຼວງ ຄູ່ກໍລະນີມີສິດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 78 (ໃໝ່) ການຮ້ອງຟ້ອງຕໍ່ສານປະຊາຊົນ**

ໃນກໍລະນີເກີດຂໍ້ຂັດແຍ່ງກ່ຽວກັບກິດຈະການທາງຫຼວງ ຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ມີສິດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສີນຕາມກົດໝາຍ.

**ມາດຕາ 79 (ໃໝ່) ການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ**

ໃນການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ ກ່ຽວກັບການດຳເນີນກິດຈະການທາງຫຼວງ ຄູ່ກໍລະນີສາມາດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງພາຍໃນ, ຕ່າງປະເທດ ຫຼື ສາກົນ ຕາມການຕົກລົງກັນ ຫຼື ໃຫ້ປະຕິບັດຕາມ ສັນຍາສາກົນ ແລະ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ XI
## ການຄຸ້ມຄອງ ແລະ ການກວດກາ

### ໝວດທີ 1
### ການຄຸ້ມຄອງວຽກງານທາງຫຼວງ

**ມາດຕາ 80 (ປັບປຸງ) ອົງການຄຸ້ມຄອງວຽກງານທາງຫຼວງ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານທາງຫຼວງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງວຽກງານດັ່ງກ່າວ ຕາມຄວາມຮັບຜິດຊອບຂອງຕົນ.

ອົງການຄຸ້ມຄອງວຽກງານທາງຫຼວງ ປະກອບດ້ວຍ:

1. ກະຊວງໂຍທາທິການ ແລະ ຂົນສົ່ງ;
2. ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ;
3. ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ;
4. ໜ່ວຍງານໂຍທາທິການ ແລະ ຂົນສົ່ງ ປະຈຳບ້ານ.

**ມາດຕາ 81 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ**

ໃນການຄຸ້ມຄອງວຽກງານທາງຫຼວງ ກະຊວງໂຍທາທິການ ແລະ ຂົນສົ່ງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ, ແຜນຍຸດທະສາດພັດທະນາທາງຫຼວງ, ແຜນແມ່ບົດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານທາງຫຼວງ ເພື່ອສະເໜີລັດຖະບານພິຈາລະນາ;

2. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດພັດທະນາທາງຫຼວງ, ແຜນແມ່ບົດ ແລະ ກົດໝາຍກ່ຽວກັບວຽກງານທາງຫຼວງເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດພັດທະນາທາງຫຼວງ, ແຜນແມ່ບົດ, ກົດໝາຍ ແລະ ລະບຽບການ ເພື່ອສ້າງຈິດສຳນຶກໃນການປະກອບສ່ວນເຂົ້າໃນວຽກງານທາງຫຼວງ ໃນຂອບເຂດທົ່ວປະເທດ;

4. ຊີ້ນຳ, ຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດພັດທະນາທາງຫຼວງ, ແຜນແມ່ບົດ, ກົດໝາຍ, ລະບຽບການ, ແຜນການລົງທຶນ ແລະ ແຜນການພັດທະນາວຽກງານທາງຫຼວງ;

5. ຄົ້ນຄວ້າ ແລະ ກຳນົດ ລະບຽບການຄຸ້ມຄອງ, ມາດຕະຖານເຕັກນິກ ແລະ ກຳນົດໝາຍເຕັກນິກກ່ຽວກັບວຽກງານທາງຫຼວງ ແລະ ເລືອກເຟັ້ນເຕັກໂນໂລຊີທີ່ເໝາະສົມ ພ້ອມທັງອອກຄຳແນະນຳໃນການຈັດຕັ້ງປະຕິບັດ;

6. ຄົ້ນຄວ້າ ແລະ ກຳນົດລາຄາຫົວໜ່ວຍກໍ່ສ້າງ, ບູລະນະຮັກສາ ແລະ ສ້ອມແປງທາງຫຼວງເພື່ອສະເໜີໃຫ້ລັດຖະບານພິຈາລະນາຮັບຮອງ;

7. ຄຸ້ມຄອງໂດຍກົງ ທາງຫຼວງແຫ່ງຊາດ ລວມທັງທີ່ດິນທາງຫຼວງ;

8. ສັງລວມ ຂໍ້ມູນ ສະຖິຕິ ກ່ຽວກັບວຽກງານທາງຫຼວງ ໃນຂອບເຂດທົ່ວປະເທດ;

9. ຄົ້ນຄວ້າ ແລະ ມີຄຳເຫັນກ່ຽວກັບການລົງທຶນໂຄງການກິດຈະການທາງຫຼວງ, ສະເໜີໂຈະ ແລະ ຍົກເລີກໂຄງການລົງທຶນ;

10. ຄຸ້ມຄອງການດຳເນີນທຸລະກິດກ່ຽວກັບທາງຫຼວງ ແລະ ການເຄື່ອນໄຫວ ຂອງສະມາຄົມວິຊາຊີບກໍ່ສ້າງຂົວທາງ;

11. ສ້າງ, ບຳລຸງ ແລະ ຍົກລະດັບ ບຸກຄະລາກອນກ່ຽວກັບວຽກງານທາງຫຼວງ;

12. ຄົ້ນຄວ້າ ແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບວຽກງານທາງຫຼວງ;

13. ປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກ່ຽວກັບວຽກງານທາງຫຼວງ;

14. ຄົ້ນຄວ້າ ຊອກຫາແຫຼ່ງທຶນ ທັງພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາທາງຫຼວງ;

15. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານທາງຫຼວງ;

16. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານທາງຫຼວງ ຕໍ່ລັດຖະບານຢ່າງເປັນປົກກະຕິ;

17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

**ມາດຕາ 82 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານທາງຫຼວງ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ ອົງການປົກຄອງຂັ້ນແຂວງ ໃນການຄຸ້ມຄອງທາງຫຼວງແຂວງ, ທາງຫຼວງເມືອງ, ທາງຕົວເມືອງ ແລະ ທາງສະເພາະ;

2. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດພັດທະນາທາງຫຼວງ, ແຜນແມ່ບົດ, ແຜນພັດທະນາວຽກງານທາງຫຼວງ, ກົດໝາຍ ແລະ ລະບຽບການ;

3. ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດພັດທະນາທາງຫຼວງ, ແຜນແມ່ບົດ, ກົດໝາຍ ແລະ ລະບຽບການ;

4. ຊີ້ນຳ ແລະ ຕິດຕາມ ການຈັດຕັ້ງປະຕິບັດວຽກງານທາງຫຼວງ;

5. ສຳຫຼວດ, ເກັບກຳ ຂໍ້ມູນ, ສະຖິຕິ ກ່ຽວກັບວຽກງານທາງຫຼວງ;

6. ຄົ້ນຄວ້າ ແລະ ມີຄຳເຫັນກ່ຽວກັບການລົງທຶນໂຄງການກິດຈະການທາງຫຼວງ, ສະເໜີໂຈະ ແລະ ຍົກເລີກໂຄງການລົງທຶນ;

7. ຄຸ້ມຄອງການດຳເນີນທຸລະກິດກ່ຽວກັບທາງຫຼວງ ແລະ ການເຄື່ອນໄຫວຂອງສະມາຄົມວິຊາຊີບກໍ່ສ້າງຂົວທາງ;

8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານທາງຫຼວງຕາມການມອບໝາຍຂອງຂັ້ນເທິງ;

9. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານທາງຫຼວງ ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

**ມາດຕາ 83 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານທາງຫຼວງ ຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ເປັນເສນາທິການໃຫ້ແກ່ ອົງການປົກຄອງຂັ້ນເມືອງ ໃນການຄຸ້ມຄອງທາງຊົນນະບົດ;

2. ເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດພັດທະນາທາງຫຼວງ, ແຜນແມ່ບົດ, ກົດໝາຍ ແລະ ລະບຽບການ;

3. ຊຸກຍູ້ ແລະ ຕິດຕາມ ການຈັດຕັ້ງປະຕິບັດກິດຈະການທາງຫຼວງ;

4. ຄົ້ນຄວ້າ ແລະ ມີຄຳເຫັນກ່ຽວກັບການລົງທຶນໂຄງການກິດຈະການທາງຫຼວງ, ສະເໜີໂຈະ ແລະ ຍົກເລີກ ໂຄງການລົງທຶນ;

5. ຄຸ້ມຄອງທາງຫຼວງ ແລະ ຂອບເຂດສະຫງວນທາງຫຼວງ;

6. ສຳຫຼວດ, ເກັບກຳ ຂໍ້ມູນ, ສະຖິຕິ ກ່ຽວກັບວຽກງານທາງຫຼວງ;

7. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານທາງຫຼວງ ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ.

**ມາດຕາ 84 (ປັບປຸງ) ສິດ ແລະ ໜ້າທີ່ ຂອງໜ່ວຍງານ ໂຍທາທິການ ແລະ ຂົນສົ່ງ ປະຈຳບ້ານ**

ໃນການຄຸ້ມຄອງວຽກງານທາງຫຼວງ ໜ່ວຍງານ ໂຍທາທິການ ແລະ ຂົນສົ່ງ ປະຈຳບ້ານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເຜີຍແຜ່ ແຜນຍຸດທະສາດພັດທະນາທາງຫຼວງ, ກົດໝາຍ ແລະ ລະບຽບການ ໃນຂອບເຂດບ້ານຂອງຕົນ;

2. ຄຸ້ມຄອງ ແລະ ປົກປັກຮັກສາ ໂຄງປະກອບ, ສິ່ງປະກອບ ແລະ ສິ່ງປ້ອງກັນຄວາມປອດໄພຂອງທາງຫຼວງ ໃນຂອບເຂດບ້ານຂອງຕົນ ແລະ ຕາມການມອບໝາຍຂອງ ເມືອງ, ເທດສະບານ, ນະຄອນ;

3. ຕິດຕາມ ແລະ ລາຍງານ ການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບທາງຫຼວງ ໃຫ້ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ, ເຈົ້າໜ້າທີ່ທາງຫຼວງ ແລະ ການຈັດຕັ້ງອື່ນທີ່ກ່ຽວຂ້ອງ;

4. ປຸກລະດົມປະຊາຊົນ ໃຫ້ການຮ່ວມມື, ມີພັນທະ, ມີສ່ວນຮ່ວມ ແລະ ປະກອບຄຳເຫັນເຂົ້າໃນວຽກງານທາງຫຼວງ ເປັນຕົ້ນ ການກໍ່ສ້າງ, ບູລະນະຮັກສາ ແລະ ການຍົກຍ້າຍສິ່ງກີດຂວາງ;

5. ລາຍງານ ສະພາບກ່ຽວກັບທາງຫຼວງທີ່ຕົນຮັບຜິດຊອບ ໃຫ້ຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ, ນະຄອນ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 85 (ໃໝ່) ສິດ ແລະ ໜ້າທີ່ ຂອງຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ**

ໃນການຄຸ້ມຄອງວຽກງານທາງຫຼວງ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ຮ່ວມມືກັບອົງການຄຸ້ມຄອງວຽກງານທາງຫຼວງ ໃນການຈັດຕັ້ງປະ

ຕິບັດກົດໝາຍສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານທາງຫຼວງ

**ມາດຕາ 86 (ປັບປຸງ) ອົງການກວດກາວຽກງານທາງຫຼວງ**

ອົງການກວດກາວຽກງານທາງຫຼວງ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານທາງຫຼວງຕາມທີ່ກຳນົດໄວ້ໃນມາດຕາ 80 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງມີ ສະພາແຫ່ງຊາດ, ອົງການກວດກາລັດຖະບານ, ອົງການກວດສອບແຫ່ງລັດ, ສະພາປະຊາຊົນຂັ້ນແຂວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ສື່ມວນຊົນຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ທີ່ໄດ້ກຳນົດໄວ້ໃນກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 87 (ປັບປຸງ) ເນື້ອໃນການກວດກາ**

ການກວດກາວຽກງານທາງຫຼວງ ມີ ເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ແຜນແມ່ບົດ, ແຜນພັດທະນາວຽກງານທາງຫຼວງ, ກົດໝາຍ ແລະ ລະບຽບການກ່ຽວກັບທາງຫຼວງ;

2. ການຈັດຕັ້ງປະຕິບັດໜ້າທີ່ຂອງ ເຈົ້າໜ້າທີ່, ພະນັກງານ ທີ່ຮັບຜິດຊອບວຽກງານທາງຫຼວງ;

3. ກິດຈະການ ແລະ ການດຳເນີນທຸລະກິດ ກ່ຽວກັບທາງຫຼວງ ລວມທັງການປະມູນ, ສັນຍາກ່ຽວກັບກິດຈະການທາງຫຼວງ;

4. ການປະຕິບັດ ກຳນົດໝາຍເຕັກນິກ ແລະ ມາດຕະຖານເຕັກນິກ, ລາຄາຫົວໜ່ວຍໃນການຈັດຕັ້ງປະຕິບັດໂຄງການກິດຈະການທາງຫຼວງ;

5. ມາດຕະຖານຄວາມປອດໄພ, ມາດຕະການປ້ອງກັນ, ການແກ້ໄຂຜົນກະທົບ ແລະ ການທົດແທນຄວາມເສຍຫາຍ ທີ່ພົວພັນກັບການດຳເນີນກິດຈະການທາງຫຼວງ.

ນອກຈາກນີ້ ການກວດກາ ໃຫ້ປະຕິບັດຕາມເນື້ອໃນການກວດກາ ທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍການລົງທຶນຂອງລັດ.

**ມາດຕາ 88 (ປັບປຸງ) ຮູບການກວດກາ**

ການກວດກາວຽກງານທາງຫຼວງ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາ ຕາມປົກກະຕິ;

2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;

3. ການກວດກາ ແບບກະທັນຫັນ.

ການກວດກາຕາມປົກກະຕິ ແມ່ນ ການກວດກາຕາມແຜນການ ທີ່ມີລັກສະນະກວດກາເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ.

ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ກ່ອນ ຢ່າງໜ້ອຍ ຊາວສີ່ ຊົ່ວໂມງ.

ການກວດກາ ແບບກະທັນຫັນ ແມ່ນ ການກວດກາເມື່ອເຫັນວ່າມີຄວາມຈຳເປັນ, ຮີບດ່ວນ ໂດຍບໍ່ໄດ້ແຈ້ງລ່ວງໜ້າໃຫ້ຜູ້ຖືກກວດກາຮູ້.

ການກວດກາ ໃຫ້ດຳເນີນທັງການກວດກາເອກະສານ, ການປະຕິບັດຕົວຈິງ ແລະ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ.

**ມາດຕາ 89 (ໃໝ່) ເຈົ້າໜ້າທີ່ໂຍທາທິການ ແລະ ຂົນສົ່ງ**

ເຈົ້າໜ້າທີ່ໂຍທາທິການ ແລະ ຂົນສົ່ງ ແມ່ນ ພະນັກງານສັງກັດຢູ່ ອົງການກວດກາພາຍໃນວຽກງານທາງຫຼວງ ຊຶ່ງມີໜ້າທີ່ກວດກາ ແລະ ສືບສວນ-ສອບສວນ ກ່ຽວກັບທາງຫຼວງ ແລະ ທີ່ດິນທາງຫຼວງ ຕາມກົດໝາຍ ແລະ ລະບຽບການກ່ຽວກັບທາງຫຼວງ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ສຳລັບການຈັດຕັ້ງ, ການເຄື່ອນໄຫວ, ມາດຕະຖານ, ເຄື່ອງແບບ ແລະ ເຄື່ອງໝາຍສະເພາະໃນການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ໂຍທາທິການ ແລະ ຂົນສົ່ງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 90 (ໃໝ່) ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ໂຍທາທິການ ແລະ ຂົນສົ່ງ**

ເຈົ້າໜ້າທີ່ໂຍທາທິການ ແລະ ຂົນສົ່ງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມ ແລະ ກວດກາການນຳໃຊ້ເສັ້ນທາງຫຼວງຢ່າງເປັນປົກກະຕິ ແລະ ແກ້ໄຂຢ່າງທັນການ ໃນກໍລະນີມີການລະເມີດກົດໝາຍສະບັບນີ້ ແລະ ລະບຽບການກ່ຽວກັບທາງຫຼວງ ເປັນຕົ້ນ ການບຸກລຸກເຂດສະຫງວນທາງ, ການທຳລາຍ ສິ່ງປະກອບ, ໂຄງປະກອບ ຂອງທາງຫຼວງ ແລະ ການສ້າງຄວາມເປິະເປື້ອນໃສ່ທາງຫຼວງ;

2. ເກັບກຳ, ສະໜອງຂໍ້ມູນ ຫຼັກຖານ ແລ້ວສະເໜີຂະແໜງການທີ່ກ່ຽວຂ້ອງພິຈາລະນາແກ້ໄຂ ຕາມກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານທາງຫຼວງ ເປັນຕົ້ນ ການຕິດຕັ້ງປ້າຍໂຄສະນາ, ການຕັ້ງເສົາໄຟຟ້າ, ການຂຸດຮ່ອງລະບາຍນ້ຳ;

3. ຮັບ ແລະ ບັນທຶກການແຈ້ງຄວາມ, ທວງເອົາ ແລະ ກວດກາເອກະສານ ທີ່ເຫັນວ່າມີການລະເມີດກົດໝາຍສະບັບນີ້ ແລະ ລະບຽບການກ່ຽວກັບທາງຫຼວງ;

4. ດຳເນີນການ ສືບສວນ-ສອບສວນ ລວມທັງວິທີການ ສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ;

5. ສະຫຼຸບການສືບສວນ-ສອບສວນ ແລະ ປະກອບສຳນວນຄະດີ ແລ້ວສົ່ງໃຫ້ອົງການໄອຍະການປະຊາຊົນ ເພື່ອພິຈາລະນາສັ່ງຟ້ອງຂຶ້ນສານ;

6. ພົວພັນ ແລະ ປະສານສົມທົບກັບການຈັດຕັ້ງອື່ນທີ່ກ່ຽວຂ້ອງ ລວມທັງ ອົງການປົກຄອງທ້ອງຖິ່ນ ກ່ຽວກັບການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

## ພາກທີ XII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 91 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການປະກອບສ່ວນເຂົ້າໃນກິດຈະການທາງຫຼວງ ຈະໄດ້ຮັບການຍ້ອງຍໍ ແລະ ການປະຕິບັດນະໂຍບາຍອື່ນຕາມລະບຽບການ.

### ມາດຕາ 92 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ.

### ມາດຕາ 93 (ປັບປຸງ) ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບທາງຫຼວງເປັນຄັ້ງທຳອິດທີ່ບໍ່ເປັນອັນຕະລາຍ ຫຼື ຮ້າຍແຮງດ້ວຍຄວາມບໍ່ລະມັດລະວັງ ແລະ ກໍ່ຄວາມເສຍຫາຍທີ່ມີມູນຄ່າບໍ່ຫຼວງຫຼາຍ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນຕາມລະບຽບການ.

### ມາດຕາ 94 (ໃໝ່) ມາດຕະການທາງວິໄນ

ເຈົ້າໜ້າທີ່ ຫຼື ພະນັກງານ ທີ່ໄດ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບທາງຫຼວງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແຕ່ບໍ່ຈິງໃຈລາຍງານຈະຖືກລົງວິໄນຕາມແຕ່ລະກໍລະນີ ເຊັ່ນ ກ່າວເຕືອນ, ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ, ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕໍ່າກວ່າເກົ່າ, ໃຫ້ອອກຈາກລັດຖະການໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

**ມາດຕາ 95 (ປັບປຸງ) ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບທາງຫຼວງ ເປັນຕົ້ນ ຂໍ້ຫ້າມ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ແລະ ເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນສັນຍາກ່ຽວກັບກິດຈະການທາງຫຼວງ ຈະຖືກປັບໃໝຕາມທີ່ໄດ້ກຳນົດໄວ້ໃນລະບຽບການ.

ສຳລັບອັດຕາການປັບໃໝ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 96 (ໃໝ່) ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບທາງຫຼວງ ຊຶ່ງໄດ້ກໍ່ຄວາມເສຍຫາຍແກ່ຊັບສິນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 97 (ປັບປຸງ) ມາດຕະການທາງອາຍາ**

ບຸກຄົນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດຕາມກົດໝາຍອາຍາ ຫຼື ກົດໝາຍອື່ນ ທີ່ກຳນົດໂທດທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ.

## ພາກທີ XIII
## ບົດບັນຍັດສຸດທ້າຍ

**ມາດຕາ 98 ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 99 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍທາງຫຼວງ ສະບັບເລກທີ 04/99/ສພຊ, ລົງວັນທີ 3 ເມສາ 1999.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້